**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ..1814......../ຫອຄ

ນະຄອນຫຼວງວຽງຈັນ, ວັນທີ..02....ກັນຍາ 2022

# ສະໂນດນຳສົ່ງ

**ຮຽນ:** ..........................................................................................................

**ເລື່ອງ:** ນຳສົ່ງ ຮ່າງແຜນພັດທະນາຊັບສິນທາງປັນຍາຂອງ ສປປ ລາວ ຮອດປີ 2025 ແລະ ວິໄສທັດ 2030.

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 1. | ຮ່າງແຜນພັດທະນາຊັບສິນທາງປັນຍາ ຂອງ ສປປ ລາວ ຮອດປີ 2025 ແລະ ວິໄສທັດ 2030 | 1 ສະບັບ | ເພື່ອປະກອບຄຳເຫັນ ສົ່ງໃຫ້ ກົມຊັບສິນທາງປັນຍາ ກ່ອນ ວັນທີ 09 ກັນຍາ 2022. |

**ຫົວໜ້າຫ້ອງການ**

ວິທູນ ສິດທິມົນລະດາ

**ເອກະສານຄັດຕິດ:**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

DRAFT

# ແຜນພັດທະນາຊັບສິນທາງປັນຍາຂອງ ສປປ ລາວ ຮອດປີ 2025 ແລະ ວິໄສທັດ 2030

**ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ**
**ສິງຫາ 2022**

DRAFT

ສາລະບານ


**ພາກທີ I: ສະຫຼຸບການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ແຕ່ປີ 2010-2020** ..... 5

**I. ສະພາບລວມ** ..... 5

1. ສະພາບການພັດທະນາຊັບສິນທາງປັນຍາ ໃນພາກພື້ນ ແລະ ສາກົນ ..... 5
2. ສະພາບການພັດທະນາຊັບສິນທາງປັນຍາ ພາຍໃນປະເທດ ..... 6

**II. ຜົນການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ແຕ່ປີ 2010-2020** ..... 7

1. ການຮ່ວມມືສອງຝ່າຍ ..... 7
2. ສັນຍາໃນລະດັບພາກພື້ນ ..... 8
3. ພັນທະຕໍ່ສາກົນ ..... 8
4. ການຈັດຕັ້ງປະຕິບັດໂຄງການລັດຖະບານ ແລະ ໂຄງການຊ່ວຍເຫຼືອຈາກຕ່າງປະເທດ ..... 10
5. ການໂຄສະນາເຜີຍແຜ່ວຽກງານຊັບສິນທາງປັນຍາ ..... 10
6. ການຄຸ້ມຄອງວຽກງານຊັບສິນທາງປັນຍາ ..... 11
7. ນິຕິກຳດ້ານຊັບສິນທາງປັນຍາ ..... 12
8. ສະຖິຕິຊັບສິນທາງປັນຍາ ..... 13
9. ລາຍຮັບເຂົ້າງົບປະມານ ..... 15

**III. ຕີລາຄາສະພາບລວມ ການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ປີ 2010-2020** ..... 16

1. ດ້ານດີ ..... 16

.2 ຈຸດຄົງຄ້າງ ..... 17

3. ໂອກາດ ..... 17
4. ອຸປະສັກ ..... 18
5. ບົດຮຽນທີ່ຖອດຖອນໄດ້ ..... 19

**ພາກທີ II: ແຜນພັດທະນາວຽກງານຊັບສິນທາງປັນຍາ ແລະ ວິໄສທັດ ຮອດປີ 2030** ..... 21

**I. ວິໄສທັດ ແລະ ເປົ້າໝາຍລວມ** ..... 21

1. ວິໄສທັດ ຮອດປີ 2030 ..... 21
2. ເປົ້າໝາຍລວມ ..... 21

**II. ແຜນງານການພັດທະນາຊັບສິນທາງປັນຍາ ຮອດປີ 2025** ..... 22

ແຜນງານ 1: ສ້າງ ແລະ ປັບປຸງກົນໄກການຄຸ້ມຄອງ ວຽກງານຊັບສິນທາງປັນຍາ ໃຫ້ເປັນລະບົບຄົບຊຸດ ທັງສູນກາງ ແລະ ທ້ອງຖິ່ນ ຜ່ານນະໂຍບາຍ, ຍຸດທະສາດ, ນິຕິກຳ, ແຜນງານ ແລະ ໂຄງການ ເພື່ອຈັດຕັ້ງປະຕິບັດໃຫ້ເປັນເອກະພາບໃນທົ່ວປະເທດ 22

ແຜນງານ 2: ເພີ່ມທະວີການສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບ ວຽກງານຊັບສິນທາງປັນຍາໃຫ້ແກ່ສາທາລະນະຊົນ ຢ່າງກວ້າງຂວາງໃນຂອບເຂດທົ່ວປະເທດ ຜ່ານການໂຄສະນາເຜີຍແຜ່ຢ່າງມີປະສິດທິຜົນ ..... 23

ແຜນງານ 3: ເພີ່ມທະວີການນຳໃຊ້ຊັບສິນທາງປັນຍາ ໃນສະຖາບັນການສຶກສາ, ສະຖາບັນຄົ້ນຄວ້າ-ວິໄຈ ແລະ ວິສາຫະກິດ ຂະແໜງ ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການຄ້າ, ການບໍລິການ ແລະ ວັດທະນະທຳ ..... 23

ແຜນງານ 4: ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການ ທີ່ຕິດພັນກັບວຽກງານຊັບສິນທາງປັນຍາ ເພື່ອຮັບປະກັນຄຸນະພາບຂອງການໃຫ້ບໍລິການຊັບສິນທາງປັນຍາ ແກ່ສາທາລະນະຊົນ ..... 24


DRAFT

ແຜນງານ 5: ນຳໃຊ້ເຕັກໂນໂລຊີເຂົ້າໃນການຄຸ້ມຄອງ ແລະ ບໍລິການດ້ານຊັບສິນທາງປັນຍາ ໃຫ້ທັນສະໄໝ, ສະດວກ, ວ່ອງໄວ ແລະ ໂປ່ງໃສ; ..... 25
ແຜນງານ 6: ສ້າງ ແລະ ປັບປຸງກົນໄກ ການແກ້ໄຂທາງດ້ານບໍລິຫານ ວຽກງານຊັບສິນທາງປັນຍາ ລວມທັງ ກົນໄກການບັງຄັບໃຊ້ກົດໝາຍຊັບສິນທາງປັນຍາ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍຸຕິທຳ ..... 26
ແຜນງານ 7: ເພີ່ມທະວີການຮ່ວມມື ແລະ ເຊື່ອມໂຍງ ວຽກງານຊັບສິນທາງປັນຍາກັບບັນດາປະເທດໃນພາກພື້ນ ແລະ ສາກົນ ແລະ ປະຕິບັດໃຫ້ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ. ..... 26
III. ການສົ່ງເສີມບົດບາດ ຍິງ-ຊາຍ ..... 27
ພາກທີ III: ມາດຕະການຈັດຕັ້ງປະຕິບັດ, ກົນໄກປະສານງານ, ວິທີການຈັດຕັ້ງປະຕິບັດ ແລະ ການຕິດຕາມ, ປະເມີນຜົນ ແລະ ລາຍງານ ..... 29
I. ມາດຕະການຈັດຕັ້ງປະຕິບັດ ..... 29
II. ກົນໄກປະສານງານ ..... 29
III. ວິທີການຈັດຕັ້ງປະຕິບັດ ..... 30
IV. ການຕິດຕາມ, ປະເມີນຜົນ ແລະ ລາຍງານ ..... 30
ພາກທີ IV : ງົບປະມານ ແລະ ແຫຼ່ງທຶນ ..... 32
I. ງົບປະມານ ..... 32
II. ແຫຼ່ງທຶນ ..... 32

DRAFT

# ພາກທີ I: ສະຫຼຸບການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ແຕ່ປີ 2010-2020

## I. ສະພາບລວມ

### 1. ສະພາບການພັດທະນາຊັບສິນທາງປັນຍາ ໃນພາກພື້ນ ແລະ ສາກົນ

ໃນຕອນຕົ້ນຂອງທົດສະວັດນີ້ (2010-2020), ທະນາຄານໂລກໄດ້ຈັດພິມການຮອບຮອມບົດສອບຖາມ ໃນຂົງເຂດເສດຖະກິດ ກ່ຽວກັບການປົກປ້ອງຊັບສິນທາງປັນຍາ (Siebeck, 1990). ນັບຕັ້ງແຕ່ນັ້ນມາ, ຂົງເຂດ ຊັບສິນທາງປັນຍາ ໄດ້ມີການປ່ຽນແປງຢ່າງໃຫຍ່ຫຼວງ ຊຶ່ງມີຜົນປະໂຫຍດຢ່າງຫຼວງຫຼາຍຕໍ່ບັນດາປະເທດກຳລັງ ພັດທະນາ. ການພັດທະນາດ້ານເຕັກໂນໂລຊີຢ່າງວ່ອງໄວ ໄດ້ເຮັດໃຫ້ເກີດມີ ຜະລິດຕະພັນ ແລະ ເຕັກໂນໂລຊີໃໝ່ ຢ່າງຫຼວງຫຼາຍ ແລະ ໄດ້ຮັບການປົກປ້ອງສິດ ປະເພດຕ່າງໆຢ່າງເໝາະສົມ. ໃນດ້ານນະໂຍບາຍ, ສັນຍາ ວ່າດ້ວຍ ການສ້າງຕັ້ງອົງການການຄ້າໂລກ ຊຶ່ງໄດ້ຕົກລົງກັນທີ່ ມາລາເກັສ (Marrakesh Agreement) ໄດ້ມີຜົນບັງຄັບ ໃຊ້ ໃນປີ 1995 ຊຶ່ງສັນຍາ ວ່າດ້ວຍຊັບສິນທາງປັນຍາທີ່ຕິດພັນກັບການຄ້າ (TRIPS) ກໍ່ແມ່ນສັນຍາໜຶ່ງໃນໝ າກຜົນຈອງການເຈລະຈາການຄ້າ ທີ່ລວມຢູ່ໃນສັນຍາການສ້າງຕັ້ງອົງການການຄ້າໂລກ. ການສ້າງສັນຍາ TRIPS ເປັນຜົນສຳເລັດອັນສຳຄັນທີ່ສຸດ ຂອງການປົກປ້ອງຊັບສິນທາງປັນຍາ ໃນຊ່ວງໄລຍະເວລາ 100 ປີທີ່ຜ່ານມາ. ສັນຍາ TRIPS ເປັນມາດຕະຖານຕ່ຳສຸດຂອງການປົກປ້ອງຊັບສິນທາງປັນຍາ ແລະ ປະກອບກັບລະບົບການແກ້ໄຂ ຂໍ້ຂັດແຍ່ງຂອງອົງການການຄ້າໂລກ, ເຮັດໃຫ້ເກີດມີກົນໄກການຕັດສິນຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ ລະຫວ່າງປະເທດສະມາຊິກ ໃນລະດັບສາກົນຂຶ້ນເປັນຄັ້ງທຳອິດ. ມາເຖິງເດືອນທັນວາ 2017, ອົງການການຄ້າໂລກ ໄດ້ມີສະມາຊິກທັງໝົດ 164 ປະເທດຊຶ່ງກວມເອົາຫຼາຍກວ່າ 90% ຂອງການຄ້າດ້ານສິນຄ້າ ແລະ ການບໍລິການ ຂອງໂລກ. ສປປ ລາວ ກໍເປັນສະມາຊິກຂອງອົງການການຄ້າໂລກຕັ້ງແຕ່ ວັນທີ 2 ກຸມພາ 2013.

ໃນຍຸກປະຈຸບັນ ແມ່ນໄດ້ເຫັນເຖິງຄວາມກ້າວໜ້າຂອງການປະຕິວັດອຸດສາຫະກຳ ຄັ້ງທີ 4 (ຫຼື ການ ປະຕິວັດອຸດສາຫະກຳ 4.0) ຊຶ່ງໄດ້ນຳເອົາສິ່ງປະດິດໃໝ່ໃນດ້ານການຂົນສົ່ງແບບອັດຕະໂນມັດ, ນາໂນເຕັກໂນໂລຊີ, ອິນເຕີເນັດແຫ່ງສັບພະສິ່ງ (the Internet of Things), ອຸປະກອນທີ່ທັນສະໄໝ, ປັນຍາປະດິດ, ເຄື່ອງພິມ 3 ມິ ຕິ, ຫຸ່ນຍົນ, ຄອນເຕັ້ມ ຄອມພິວເຕີ້, ເຕັກໂນໂລຊີຊີວະພາບ (biotechnology), ຂໍ້ມູນມະຫາສານ (big data), ເຕັກໂນໂລຊີການຢັ້ງຢືນຄວາມຖືກຕ້ອງແບບຕ່ອງໂສ້ (blockchain technology) ແລະ ອື່ນໆ. ການພັດທະນາ ເຫຼົ່ານີ້ມີຜົນກະທົບທາງດ້ານເຕັກໂນໂລຊີ, ເສດຖະກິດ ແລະ ສັງຄົມຢ່າງຫຼວງຫຼາຍ ແລະ ຈະຫັນປ່ຽນວິທີການຜະລິດ , ການແຈກຢາຍຂອງສິນຄ້າ ແລະ ການບໍລິການ ເຊັ່ນດຽວກັນກັບວິທີການເຮັດວຽກ ແລະ ດຳລົງຊີວິດ. ດັ່ງນັ້ນ, ປະເທດຕ່າງໆຈຶ່ງອີງໃສ່ການຂັບເຄື່ອນປະເທດດ້ວຍ ຄວາມຮູ້ ແລະ ຊັບສິນທີ່ບໍ່ສາມາດຈັບຕ້ອງໄດ້ ເພື່ອການ ຂະຫຍາຍຕົວຂອງເສດຖະກິດ ແລະ ເພີ່ມຄວາມສາມາດໃນການແຂ່ງຂັນ, ສະນັ້ນ, ການປະຕິວັດອຸດສາຫະກຳ 4.0 ກໍ່ຈະມີຜົນກະທົບຢ່າງຫຼວງຫຼາຍຕໍ່ລະບົບຊັບສິນທາງປັນຍາ ຊຶ່ງຈະມີທັງຜົນປະໂຫຍດ ແລະ ສິ່ງທ້າທາຍ. ທ່າອ່ຽງໃນ ອະນາຄົດ ກໍ່ຈະເກີດມີຄວາມສົນໃຈ ແລະ ການນຳໃຊ້ ຊັບສິນທາງປັນຍາ ຫຼາຍຂຶ້ນ. ໃນເມື່ອ ຄວາມຕ້ອງການ ໃນ ການນຳໃຊ້ສິດຊັບສິນທາງປັນຍາຍັງສືບຕໍ່ເພີ່ມຂຶ້ນ, ສະນັ້ນ, ກໍເຮັດໃຫ້ຊັບສິນທາງປັນຍາ ມີຄວາມສະຫຼັບຊັບຊ້ອນ ຫຼາຍຂຶ້ນ ທັງດ້ານໂຄງສ້າງ ແລະ ເນື້ອໃນຂອງຊັບສິນທາງປັນຍາ. ເຕັກໂນໂລຊີໃໝ່ ເປັນຕົ້ນ blockchain ຈະ ຊ່ວຍ ຢັ້ງຢືນຄວາມເປັນເຈົ້າຂອງສິດຊັບສິນທາງປັນຍາ, ຕິດຕາມສັນຍາການອະນຸຍາດນຳໃຊ້ ແລະ ການໂອນສິດ ລະຫວ່າງຜູ້ຖືສິດ ແລະ ຜູ້ໄດ້ຮັບສິດ. ເຕັກໂນໂລຊີ Big data ທີ່ເປັນການ ຄັດຈ້ອນ ແລະ ວິເຄາະ ຂໍ້ມູນ, ການ ພັດທະນາລະບົບປັນຍາປະດິດ ແລະ ເຕັກໂນໂລຊີ neuro (Machine learning system) ແລະ ອື່ນໆ ຊຶ່ງເຮັດ

DRAFT

ໃຫ້ມີການກວດຄົ້ນ ແລະ ການກວດສອບສິດທິບັດ ເພີ່ມຂຶ້ນ. ເຕັກໂນໂລຊີ ການພິມ 3 ມິຕິ ໄດ້ກາຍເປັນເງື່ອນໄຂເຮັດໃຫ້ບຸກຄົນທີ່ເຮັດໃຫ້ຍີ່ຫໍ້ເສື່ອມເສຍ ຫຼື ລະເມີດສິດຊັບສິນທາງປັນຍາ ຫຼຸດລົງ ໂດຍການນຳໃຊ້ສຳເນົາດິຈິຕ້ອນຂອງສິນຄ້າ ທີ່ໄດ້ຮັບການປົກປ້ອງໂດຍກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ດັ່ງນັ້ນ, ໜ່ວຍງານທີ່ກ່ຽວຂ້ອງ ຈຶ່ງຈຳເປັນຕ້ອງນຳໃຊ້ວິທີການວາງແຜນລ່ວງໜ້າ ໂດຍການວິເຄາະຢ່າງລະອຽດ ແລະ ເຂົ້າໃຈຢ່າງຊັດເຈນ ກ່ຽວກັບຜົນກະທົບຂອງການປະຕິວັດອຸດສາຫະກຳ 4.0 ເພື່ອບໍ່ພຽງແຕ່ແກ້ໄຂບັນຫາຕ່າງໆທີ່ຈະເກີດຂຶ້ນ ແຕ່ຍັງເປັນການຍາດແຍ່ງເອົາຜົນປະໂຫຍດທີ່ຈະເກີດຂຶ້ນໃນອະນາຄົດ. ຍ້ອນແນວນັ້ນ, ລັດຖະບານໄດ້ຄາດຄະເນ ສິ່ງທ້າທາຍ ແລະ ໂອກາດ ໂດຍກຳນົດນະໂຍບາຍ ແລະ ກົດໝາຍໃໝ່ ເພື່ອໃຫ້ປະເທດມີຄວາມໄດ້ປຽບ ແລະ ທັນກັບຄວາມກ້າວໜ້າຂອງເຕັກໂນໂລຊີ ໃນຍຸກຂອງການປະຕິວັດອຸດສາຫະກຳ 4.0. ດັ່ງນັ້ນ, ປັນຍາປະດິດ, ການວິເຄາະຂໍ້ມູນຂະໜາດໃຫຍ່ ແລະ ເຕັກໂນໂລຊີໃໝ່ ເຊັ່ນ: blockchain ສາມາດນຳໃຊ້ໄດ້ຢ່າງມີປະສິດທິພາບ ເພື່ອແກ້ໄຂບັນຫາທ້າທາຍທີ່ຈະເກີດຂຶ້ນຕໍ່ລະບົບຊັບສິນທາງປັນຍາ ໃນລະດັບຊາດ, ພາກພື້ນ ແລະ ສາກົນ.

## 2. ສະພາບການພັດທະນາຊັບສິນທາງປັນຍາ ພາຍໃນປະເທດ

ສປປ ລາວ ໄດ້ມີການສ້າງຕັ້ງ ລະບົບການປົກປ້ອງຊັບສິນທາງປັນຍາ ແຕ່ປີ 1990 ເປັນຕົ້ນມາ ແຕ່ການພັດທະນາວຽກງານດັ່ງກ່າວ ຍັງຢູ່ໃນຂັ້ນເລີ່ມຕົ້ນ ເມື່ອທຽບໃສ່ບາງປະເທດໃນອາຊຽນ. ໃນທາງກົງກັນຂ້າມ, ສະພາບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ມີການຂະຫຍາຍຕົວຢ່າງວ່ອງໄວ ຊຶ່ງມັນສະແດງອອກຢູ່ໃນການຂະຫຍາຍຕົວຂອງ GDP ໃນແຕ່ລະປີ ຢູ່ໃນລະດັບ 7-8 % ໃນໄລຍະ 10 ປີ (2010-2020) ຜ່ານມາ ຊຶ່ງເປັນການປະກອບສ່ວນຈາກການຂະຫຍາຍຕົວທາງດ້ານການຄ້າ, ການຜະລິດ, ການບໍລິການ, ການລົງທຶນທັງພາຍໃນ ແລະ ຕ່າງປະເທດ.

ໃນຍຸກແຫ່ງການແຂ່ງຂັນທາງດ້ານທຸລະກິດ ແລະ ຕະຫຼາດການຄ້າເສລີ, ສປປ ລາວ ໄດ້ເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ (AEC), ຊຶ່ງເປັນຖານການຜະລິດດຽວ ແລະ ຕະຫຼາດດຽວ ໃນທ້າຍປີ 2015. ບັນຫາການປົກປ້ອງຊັບສິນທາງປັນຍາ ແມ່ນນັບມື້ນັບມີຄວາມສຳຄັນໃນຍຸກເສດຖະກິດປະຈຸບັນ, ການພັດທະນາ ແລະ ຂະຫຍາຍຕົວທາງດ້ານວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ລະບົບໂທລະຄົມສື່ສານຢ່າງວ່ອງໄວ ໄດ້ກະຕຸກຊຸກຍູ້ໃຫ້ເສດຖະກິດໂລກໃນຍຸກສະໄໝໃໝ່ຈະເລີນເຕີບໂຕຂຶ້ນ ຜົນສຳລັດຂອງການພັດທະນາເຕັກໂນໂນໂລຊີນັ້ນ ສ່ວນໜຶ່ງກໍ່ຍ້ອນລະບົບຊັບສິນທາງປັນຍາທີ່ດີ ເພາະການນຳໃຊ້ລະບົບຊັບສິນທາງປັນຍາ ຢ່າງມີປະສິດທິພາບຈະກະຕຸກຊຸກຍູ້ ແລະ ສົ່ງເສີມຫົວຄິດປະດິດສ້າງ, ຫົວຄິດປະດິດແຕ່ງຂອງມະນຸດ, ການຄົ້ນຄວ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ນະວັດຕະກຳ, ການຖ່າຍທອດເຕັກໂນໂລຊີ ກໍ່ຄືການລົງທຶນຈາກຕ່າງປະເທດ, ທຸລະກິດການຄ້າ ທັງພາຍໃນ ແລະ ລະຫວ່າງປະເທດ ແລະ ຮັບປະກັນຄວາມເປັນທຳໃນສັງຄົມ. ນອກຈາກນີ້ ວຽກງານຊັບສິນທາງປັນຍາ ເປັນວຽກງານໜຶ່ງທີ່ຊ່ວຍໃນການພັດທະນາ ເສດຖະກິດຂອງຊາດ ຊຶ່ງໃນຫຼາຍໆປະເທດ ຢູ່ໃນໂລກໄດ້ຖືບັນຫານີ້ເປັນບັນຫາສຳຄັນ ແລະ ມີບົດບາດສຳຄັນໃນການປະກອບສ່ວນເຂົ້າໃນການຫັນປະເທດເປັນປະເທດອຸດສາຫະກຳທີ່ທັນສະໄໝເທື່ອລະກ້າວ.

ໂດຍປະຕິບັດຕາມພັນທະໃນການສ້າງຄວາມເຂັ້ມແຂງໃຫ້ລະບົບຊັບສິນທາງປັນຍາຢູ່ ສປປ ລາວ, ລັດຖະບານ ໄດ້ເປີດກວ້າງການຮ່ວມມື ທາງດ້ານຊັບສິນທາງປັນຍາໃນກອບສອງຝ່າຍ, ພາກພື້ນ ແລະ ສາກົນ.

DRAFT

## II. ຜົນການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ແຕ່ປີ 2010-2020

### 1. ການຮ່ວມມືສອງຝ່າຍ

ກົມຊັບສິນທາງປັນຍາ ໄດ້ຍາດແຍ່ງເອົາການຮ່ວມມືກັບຕ່າງປະເທດ ຊຶ່ງໄດ້ລົງນາມບົດບັນທຶກຄວາມເຂົ້າໃຈ, ບົດບັດທຶການຮ່ວມມື ແລະ ໜັງສືສະແດງເຈດຈຳນົງຮ່ວມ ໃນຂົງເຂດຊັບສິນທາງປັນຍາ ຫຼາຍສະບັບ ດັ່ງນີ້:

| ສັນຍາສາກົນ | ປີ |
|---|---|
| ບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືໃນຂົງເຂດຊັບສິນອຸດສາຫະກຳຮ່ວມກັບສຳນັກງານສິດທິບັດ ຍີ່ປຸ່ນ | 24/5/2015 |
| ບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືໃນຂົງເຂດຊັບສິນທາງປັນຍາຮ່ວມກັບສຳນັກງານຊັບສິນທາງປັນຍາຂອງປະເທດສິງກະໂປ. | 26/8/2015 |
| ບົດບັນທຶກຄວາມເຂົ້າໃຈວ່າດ້ວຍ ການຮ່ວມມືໃນຂົງເຂດຊັບສິນທາງປັນຍາ ຮ່ວມກັບສຳນັກງານຊັບສິນທາງປັນຍາຂອງປະເທດຫວຽດນາມ. | 07/11/2015 |
| ບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືໃນຂົງເຂດ ເຄື່ອງໝາຍການຄ້າແລະຖິ່ນກຳເນີດຮ່ວມກັບຣາຊະອານາຈັກກຳປູເຈຍ. | 07/9/2016 |
| ໜັງສືສະແດງເຈດຈຳນົງຮ່ວມ ເພື່ອອຳນວຍຄວາມສະດວກໃນການອອກສິດທິບັດສຳລັບຜູ້ຮ້ອງຂໍຮັບສິດທິບັດຂອງລາວຮ່ວມກັບສຳນັກງານສິດທິບັດຍີ່ປຸ່ນ | 05/10/2016 |
| ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືໃນຂົງເຂດວຽກງານຊັບສິນທາງປັນຍາ ລະຫວ່າງກົມຊັບສິນທາງປັນຍາ, ກະຊວງ ອຸດສາຫະກຳ ແລະ ການຄ້າ ສປປ ລາວ ແລະ ກົມຊັບສິນທາງປັນຍາ, ກະຊວງການຄ້າແຫ່ງຣາຊະອານາຈັກໄທ | 15/9/2017 |
| ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືໃນຂົງເຂດວຽກງານຊັບສິນທາງປັນຍາ ລະຫວ່າງກົມຊັບສິນທາງປັນຍາກະຊວງ ອຸດສາຫະກຳ ແລະ ການຄ້າ ສປປ ລາວ ກັບອົງການຄຸ້ມຄອງຊັບສິນທາງປັນຍາແຫ່ງຊາດ ສປ ຈີນ | 04/2018 |
| ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການປະດິດສ້າງ ແລະ ສະພາບແວດລ້ອມຂອງຊັບສິນທາງປັນຍາເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄວາມສາມາດໃນການແຂ່ງຂັນຂອງຫົວໜ່ວຍທຸລະກິດຜ່ານ ຍີ່ຫໍ້ ແລະ ອອກແບບ ກັບ ອົງການຊັບສິນທາງປັນຍາໂລກ | 10/2018 |
| ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືໃນຂົງເຂດຊັບສິນທາງປັນຍາ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສຳນັກງານຊັບສິນທາງປັນຍາ ແຫ່ງ ສາທາລະນະລັດ ເກົາຫຼີ | 11/2019 |
| ບົດບັນທຶກການຮ່ວມມື ວ່າດ້ວຍການອອກສິດທິບັດ ລະຫວ່າງ ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ (ກອຕ) ແຫ່ງ ສປປ ລາວ ແລະ ສຳນັກງານຊັບສິນທາງປັນຍາ ແຫ່ງສິງກະໂປ (IPOS) | 11/2019 |
| ບົດບັນທຶກການຮ່ວມມື ໃນຂົງເຂດຊັບສິນທາງປັນຍາ ລະຫວ່າງກົມຊັບສິນທາງປັນຍາ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ສຳນັກງານຊັບສິນທາງປັນຍາແຫ່ງຟີລິບປິນ | 11/2019 |
| ບົດບັນທຶກການຮ່ວມມື ວ່າດ້ວຍການອຳນວຍຄວາມສະດວກ ໃນການອອກສິດທິບັດຢູ່ ສປປ ລາວ ລະຫວ່າງກົມຊັບສິນທາງປັນຍາ ແລະ ສຳນັກງານຊັບສິນທາງປັນຍາ ແຫ່ງ ສ.ເກົາຫຼີ | 06/2020 |

DRAFT

| | |
|---|---|
| ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການປົກປ້ອງພັນພືດໃໝ່ ລະຫວ່າງ ກົມຊັບສິນທາງປັນຍາ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງ ສປປ ລາວ ແລະ ກົມປູກຝັງ, ກະຊວງກະສິກຳ ແລະ ພັດທະນາຊົນນະບົດ ແຫ່ງ ສສ ຫວຽດນາມ | 11/2020 |

ຕາຕະລາງ 1: ສັງລວມການຮ່ວມມື ໃນຂົງເຂດຊັບສິນທາງປັນຍາ ກັບຄູ່ຮ່ວມພັດທະນາ

## 2. ສັນຍາໃນລະດັບພາກພື້ນ

ສປປ ລາວ ໄດ້ລົງນາມໃນສັນຍາລະດັບພາກພື້ນຫຼາຍສະບັບກ່ຽວກັບການຮ່ວມມືດ້ານຊັບສິນທາງປັນຍາ ຊຶ່ງມີລາຍລະອຽດດັ່ງນີ້:

| ສັນຍາ | ປີ | ຄຳອະທິບາຍ |
|---|---|---|
| ຖະແຫຼງການຂອງປະຊາຄົມບັນດາປະເທດໃນອາຊີຕາເວັນອອກສຽງໃຕ້ (ອາຊຽນ) ເດືອນສິງຫາ 1967. | 07/1997 | ໜ່ວຍງານຮ່ວມມືທາງດ້ານຊັບສິນທາງປັນຍາອາຊຽນ (AWGIPC) ເພື່ອສົ່ງເສີມ ແລະ ອຳນວຍຄວາມສະດວກການຮ່ວມມືກ່ຽວກັບຊັບສິນທາງປັນຍາໃນລະດັບພາກພື້ນອາຊຽນ, ມີແຜນປະຕິບັດງານດ້ານຊັບສິນທາງປັນຍາອາຊຽນ (2016-2025) |
| ສັນຍາ ວ່າດ້ວຍການຄ້າເສລີ ລະຫວ່າງອາຊຽນ-ອົດສະຕຣາລີ ແລະ ນິວຊີແລນ (AANZFTA) | 01/2011 | ເພື່ອຊຸກຍູ້ສົ່ງເສີມ ການຮ່ວມມືທາງດ້ານຊັບສິນທາງປັນຍາ ລະຫວ່າງອາຊຽນ ອົດສະຕຣາລີ ແລະ ນິວຊີແລນ |
| ການຮ່ວມມືທາງດ້ານເສດຖະກິດຮອບດ້ານໃນພາກພື້ນ (RCEP) | 2020 | ເພື່ອໃຫ້ບັນລຸສັນຍາ ວ່າດ້ວຍການຮ່ວມມືທາງດ້ານເສດຖະກິດຮອບດ້ານ ໃນພາກພື້ນໂດຍຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ ລະຫວ່າງອາຊຽນ-ອົດສະຕຣາລີ ແລະ ນິວຊີແລນ, ອິນເດຍ, ສ.ເກົາຫລີ, ສປ.ຈີນ, ຍີ່ປຸ່ນທີ່ລວມເອົາການຄ້າທາງດ້ານສິນຄ້າ ແລະ ບໍລິການ, ການລົງທຶນ, ການຮ່ວມມືທາງດ້ານເສດຖະກິດ ແລະ ວິຊາການ, ຊັບສິນທາງປັນຍາ, ການແຂ່ງຂັນ, ການຄ້າຜ່ານທາງອີເລັກໂຕຣ ນິກ, ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບັນຫາອື່ນໆ. |

ຕາຕະລາງ 2: ສັງລວມສັນຍາພາກພື້ນ ໃນຂົງເຂດຊັບສິນທາງປັນຍາ

## 3. ພັນທະຕໍ່ສາກົນ

ສປປ ລາວ ໄດ້ລົງນາມສັນຍາສາກົນຫຼາຍສະບັບກ່ຽວກັບຊັບສິນທາງປັນຍາ ຊຶ່ງສາມາດສະຫຼຸບໄດ້ດັ່ງຕາຕະລາງລຸ່ມນີ້:

| ຊື່ຂອງສັນຍາ | ປີເຂົ້າຮ່ວມ | ຄຳອະທິບາຍ |
|---|---|---|
| ສົນທິສັນຍາລິຂະສິດສາກົນ (UCC) | 08/1954 | ແມ່ນສັນຍາສາກົນທີ່ສະໜັບສະໜູນການແຈ້ງຜົນງານລິຂະສິດ. |

DRAFT

| | | |
|---|---|---|
| ສົນທິສັນຍາ ວ່າດ້ວຍການສ້າງຕັ້ງອົງການຊັບສິນທາງປັນຍາໂລກ (ອົງການຊັບສິນທາງປັນຍາໂລກ) | 01/1995 | ອົງການຊັບສິນທາງປັນຍາໂລກແມ່ນໜຶ່ງໃນບັນດາອົງການສະເພາະດ້ານຂອງສະຫະປະຊາຊາດຮັບຜິດຊອບກ່ຽວກັບວຽກງານຊັບສິນທາງປັນຍາ. |
| ສົນທິສັນຍາປາຣີວ່າດ້ວຍການປົກປ້ອງຊັບສິນອຸດສາຫະກຳ | 10/1998 | ແມ່ນສົນທິສັນຍາສາກົນທຳອິດທີ່ໃຫ້ການປົກປ້ອງສິດຕໍ່ຊັບສິນອຸດສາຫະກຳ. |
| ສົນທິສັນຍາວ່າ ດ້ວຍການຮ່ວມມືທາງດ້ານສິດທິບັດ (PCT) | 06/2006 | ແມ່ນສົນທິສັນຍາສາກົນເພື່ອການຈົດທະບຽນສາກົນກ່ຽວກັບສິດທິບັດຊຶ່ງເຮັດໃຫ້ຜູ້ຮ້ອງຂໍສິດທິບັດໄດ້ຮັບຄວາມສະດວກ, ປະຢັດເວລາ ແລະ ປະຢັດຄ່າໃຊ້ຈ່າຍ. |
| ສົນທິສັນຍາເບີນ ວ່າດ້ວຍການປົກປ້ອງຜົນງານທາງດ້ານວັນນະກຳ ແລະ ສິລະປະກຳ (Berne Convention) | 03/2012 | ແມ່ນສົນທິສັນຍາສາກົນທຳອິດທີ່ໃຫ້ການປົກປ້ອງລິຂະສິດ. |
| ສັນຍາວ່າດ້ວຍການຄ້າທີ່ຕິດພັນກັບສິດຕໍ່ຊັບສິນທາງປັນຍາ. (TRIPS) | 02/2013 | ແມ່ນໜຶ່ງໃນບັນດາສັນຍາຂອງອົງການ WTO ທີ່ກຳນົດມາດຕະຖານຂັ້ນຕ່ຳກ່ຽວກັບສິດຕໍ່ຊັບສິນທາງປັນຍາ. |
| ອະນຸສັນຍາທີ່ຕິດພັນກັບສັນຍາມາດຣິດ ວ່າດ້ວຍການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍ. (MADRID PROTOCOL) | 12/2015 | ແມ່ນສົນທິສັນຍາສາກົນ ທີ່ອຳນວຍຄວາມສະດວກໃນການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍໄດ້ຮັບຄວາມສະດວກ, ປະຢັດເວລາ ແລະ ປະຢັດຄ່າໃຊ້ຈ່າຍ. |
| ສົນທິສັນຍາລິສບອນ ສະບັບປັບປຸງທີ່ເຈນີວາ ວ່າດ້ວຍ ການຈົດທະບຽນສາກົນກ່ຽວກັບ ຊື່ຖິ່ນກຳເນີດສະເພາະ ແລະ ຖິ່ນກຳເນີດ | 11/2020 | ແມ່ນສົນທິສັນຍາສາກົນ ທີ່ອຳນວຍຄວາມສະດວກໃນການຈົດທະບຽນຖິ່ນກຳເນີດ ຊຶ່ງເຮັດໃຫ້ຜູ້ຮ້ອງຂໍຈົດທະບຽນ ໄດ້ຮັບຄວາມສະດວກສະບາຍ, ປະຢັດເວລາ ແລະ ຄ່າໃຊ້ຈ່າຍ. |

ຕາຕະລາງ 3: ສັນຍາ ແລະ ສົນທິສັນຍາ ສາກົນທີ່ ສປປ ລາວ ເຂົ້າເປັນພາຄີ

ໃນເມື່ອ ສປປ ລາວ ເປັນສະມາຊິກຂອງສັນຍາສາກົນເຫຼົ່ານີ້ແລ້ວເຮັດໃຫ້ ສປປ ລາວ ມີພັນທະໃນການພັດທະນາລະບົບຊັບສິນທາງປັນຍາຂອງຕົນ. ໃນຂະນະທີ່ມີຄວາມສົນໃຈ ໃນການພັດທະນາຍຸດທະສາດທາງດ້ານຊັບສິນທາງປັນຍາ ຊຶ່ງລະບົບຊັບສິນທາງປັນຍາສາມາດສະໜັບສະໜູນ ທິດທາງການພັດທະນາເສດຖະກິດ-ສັງຄົມຄືແນວໃດ; ລັດຖະບານໄດ້ພະຍາຍາມບັນລຸເປົ້າໝາຍການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສອດຄ່ອງກັບສະພາບຕົວຈິງຂອງປະເທດ ແລະ ພັນທະຂອງສັນຍາເຫຼົ່ານີ້ໃນພາກພື້ນ ແລະ ສາກົນ.

ສປປ ລາວ ຍັງໃຫ້ຄວາມສົນໃຈ ທີ່ຈະເຂົ້າເປັນພາຄີຂອງສະຫະພັນສາກົນ ເພື່ອການປົກປ້ອງພັນພືດໃໝ່ (UPOV) ແລະ ປະຈຸບັນ ສປປ ລາວ ກໍ່ໄດ້ເປັນປະເທດຜູ້ສັງເກດການຂອງ UPOV, ສັນຍາເຮັກ ວ່າດ້ວຍການຈົດທະບຽນສາກົນກ່ຽວກັບແບບອຸດສາຫະກຳ (Hague Agreement concerning the International Registration of Industrial Designs), ສົນທິສັນຍາ ວ່າດ້ວຍການປົກປ້ອງຜູ້ສະແດງ ແລະ ການບັນທຶກ

ສຽງຂອງອົງການຊັບສິນທາງປັນຍາໂລກ (WIPO Performers and Phonograms Treaty), ສົນທິສັນຍາ ເບຈິງ ວ່າດ້ວຍການສະແດງດ້ານສຽງ-ພາບ (Beijing Treaty on Audio-visual Performances), ສົນທິສັນຍາ ວ່າດ້ວຍລິຂະສິດ ຂອງອົງການຊັບສິນທາງປັນຍາໂລກ (WIPO Copyright Treaty), ສົນທິສັນຍາ ມາຣາເກັສ ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງ ຜົນງານທີ່ໄດ້ຖືກເຜີຍແຜ່ ສຳລັບຜູ້ທີ່ຕາບອດ, ຜູ້ທີ່ພິການທາງສາຍຕາ ຫຼື ຜູ້ທີ່ມີຄວາມບົກພ່ອງໃນການເບິ່ງເຫັນ (Marrakesh Treaty to Facilitate Access to Published Works for Persons who are Blind, Visually Impaired or Otherwise Print Disabled).

### 4. ການຈັດຕັ້ງປະຕິບັດໂຄງການລັດຖະບານ ແລະ ໂຄງການຊ່ວຍເຫຼືອຈາກຕ່າງປະເທດ

- ໂຄງການຄົ້ນຄວ້າວິທະຍາສາດ "ນຳໃຊ້ລະບົບຊັບສິນທາງປັນຍາ ເຂົ້າສູ່ຂະບວນການຜະລິດເປັນສິນຄ້າ" ເລີ່ມຈັດຕັ້ງປະຕິບັດ ແຕ່ປີ 2013 ເຖິງປະຈຸບັນ;
- ໂຄງການສົ່ງເສີມພັດທະນາຊົນນະບົດ ໂດຍຜ່ານການພັດທະນາ ຖິ່ນກຳເນີດສິນຄ້າ ລະດັບພາກພື້ນໃນອາຊີ ຮ່ວມມືກັບ ອົງການກອງທຶນຊ່ວຍເຫຼືອຂອງລັດຖະບານຝຣັ່ງ (AFD) ແລະ ອົງການອາຫານ ແລະ ກະສິກຳ ຂອງສະຫະປະຊາຊາດ (FAO) ເພື່ອຈົດທະບຽນຖິ່ນກຳເນີດເຂົ້າໄກ່ນ້ອຍ ແຂວງຊຽງຂວາງ, ຫົວພັນ ແລະ ກາເຟບໍລະເວນ ແຂວງຈຳປາສັກ, ສາລະວັນ ແລະ ເຊກອງ;
- ໂຄງການສົ່ງເສີມການສົ່ງອອກຂອງທຸລະກິດ ຂະໜາດນ້ອຍ ແລະ ກາງ ຜ່ານການພັດທະນາລະບົບຖິ່ນກຳເນີດຂອງທະນາຄານພັດທະນາອາຊີ (ADB) ເພື່ອຈົດທະບຽນຖິ່ນກຳເນີດ ຊາປາກຊ່ອງ ແຂວງຈຳປາສັກ, ຊາກຳແມນ ແຂວງຜົ້ງສາລີ, ຜ້າໄໝຫົວພັນ ແຂວງຫົວພັນ ແລະ ຜ້າໄໝຫຼວງພະບາງ ແຂວງຫຼວງພະບາງ;
- ໂຄງການຮ່ວມມື ລາວ-ສະຫະລັດອາເມລິກາ ເພື່ອເຊື່ອມໂຍງສາກົນ ແລະ ອາຊຽນ (LUNA II) ໃນການປັບປຸງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບປີ 2017; ສ້າງລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາ (IP Portal) ຂອງກົມຊັບສິນທາງປັນຍາ; ສ້າງ 03 ຂໍ້ຕົກລົງ ວ່າດ້ວຍ ເຄື່ອງໝາຍການຄ້າ, ຖິ່ນກຳເນີດ ແລະ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ; ມອບ Server, ຄອມພິວເຕີ ແລະ ອຸປະກອນຄົບຊຸດໃນການຮັບໃຊ້ວຽກງານຈົດທະບຽນເຄື່ອງໝາຍການຄ້າ ຜ່ານລະບົບມາດຣິດ; ຈັດພິມປຶ້ມຄວາມຮູ້ພື້ນຖານ ແລະ ແຜ່ນພັບ ກ່ຽວກັບຊັບສິນທາງປັນຍາ; ໃຫ້ທຶນຝຶກອົບຮົມ ກ່ຽວກັບ ການນຳໃຊ້ລະບົບມາດຣິດ ທີ່ປະເທດສິງກະໂປ ແລະ ການປົກປ້ອງພັນພືດໃໝ່ ທີ່ ສປປ ຫວຽດນາມ; ແລະ ຈັດກອງປະຊຸມເຜີຍແຜ່ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຢູ່ແຂວງບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ;
- ໂຄງການສ້າງສະພາບແວດລ້ອມທາງດ້ານຊັບສິນທາງປັນຍາ ກ່ຽວກັບ ການສ້າງຍີ່ຫໍ້ ແລະ ການອອກແບບ (EIE) ເພື່ອສົ່ງເສີມຄວາມສາມາດໃນການແຂ່ງຂັນທຸລະກິດ ໃຫ້ແກ່ໜ່ວຍງານເປົ້າໝາຍຮັບຜິດຊອບເຊັ່ນ: ກົມຊັບສິນທາງປັນຍາ, ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສະມາຄົມນັກທຸລະກິດຍິງ ໂດຍການໃຫ້ຄຳປຶກສາ ການສ້າງຍີ່ຫໍ້ ແລະ ການອອກແບບສິ່ງຫຸ້ມຫໍ່.

### 5. ການໂຄສະນາເຜີຍແຜ່ວຽກງານຊັບສິນທາງປັນຍາ

- ຈັດງານມະຫາກຳຊັບສິນທາງປັນຍາ ແລະ ພິທີໂຮມຊຸມນຸມຍ່າງເພື່ອສຸຂະພາບ ສະເຫຼີມສະຫຼອງວັນຊັບສິນທາງປັນຍາໂລກ ທັງໝົດ 05 ຄັ້ງ, ຈຳນວນ 04 ຄັ້ງ ຈັດຢູ່ນະຄອນຫຼວງວຽງຈັນ ແລະ 01 ຄັ້ງ ຈັດຢູ່ແຂວງຈຳປາສັກ;
- ຈັດພິມປຶ້ມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ປຶ້ມຄູ່ມື, ແຜ່ນພັບ ແລະ ຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ປະມານ 10.000 ຫົວ;

DRAFT

- ຈັດພິມເສື້ອໃນງານມະຫາກຳຊັບສິນທາງປັນຍາ ເພື່ອສະເຫຼີມສະຫຼອງວັນຊັບສິນທາງປັນຍາໂລກ ໃນທຸກໆ ປີ ຈຳນວນ 1.500 -2.000 ຜືນ/ປີ;
- ຈັດພິມເສື້ອເພື່ອສະເຫຼີມສະຫຼອງວັນວິທະຍາສາດແຫ່ງຊາດຄົບຮອບ 10 ປີ ຈຳນວນ 200 ຜືນ;
- ເຂົ້າຮ່ວມບັນຍາຍການພັດທະນາວຽກງານຊັບສິນທາງປັນຍາ ໃນກອງປະຊຸມວິທະສາດ ແລະ ເຕັກໂນໂລຊີ ທົ່ວປະເທດ ຄັ້ງທີ III;
- ເປີດນຳໃຊ້ລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາ (IP Portal) ຜ່ານ ເວັບໄຊທ໌ຂອງກົມຊັບສິນທາງປັນຍາ (www.dip.gov.la) ເພື່ອເຜີຍແຜ່ຂໍ້ມູນຂ່າວສານດ້ານວຽກງານຊັບສິນທາງປັນຍາ, ລະບຽບການ, ບັນດາກົດໝາຍ, ນິຕິກຳຕ່າງໆ ແລະ ຜົນຂອງການຈົດທະບຽນອຸດສາຫະກຳ ແລະ ພັນພືດໃໝ່;
- ໄດ້ຈັດກອງປະຊຸມເຜີຍແຜ່ ວຽກງານຊັບສິນທາງປັນຍາ ໃນຂອບເຂດທົ່ວປະເທດ ຈຳນວນ 75 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 11.300 ເທື່ອຄົນ;
- ໄດ້ຈັດກອງປະຊຸມສ້າງຄວາມເຂັ້ມແຂງດ້ານວິຊາການ ກ່ຽວກັບ ການຮັບຄຳຮ້ອງແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ ໃຫ້ຂະແໜງຊັບສິນທາງປັນຍາ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີ(ໃນເມື່ອກ່ອນ) ແລະ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ມີຜູ້ເຂົ້າຮ່ວມທັງໝົດ 2.081 ເທື່ອຄົນ;
- ໄດ້ຈັດຝຶກອົບຮົມ ກ່ຽວກັບວິທີການຊອກຫາຂໍ້ມູນຊັບສິນອຸດສາຫະກຳ ໃນລະບົບ IP Portal ໃນຂອບເຂດທົ່ວປະເທດ ມີຜູ້ເຂົ້າຮ່ວມທັງໝົດ 300 ເທື່ອຄົນ;
- ຈັດຝຶກອົບຮົມ ຮ່ວມກັບ ທະນາຄານພັດທະນາອາຊີ (ADB) ກ່ຽວກັ ວຽກງານກວດສອບ ພາຍໃນ ແລະ ພາຍນອກ ເພື່ອຮັກສາຄຸນລັກສະນະສະເພາະຂອງສິນຄ້າຖິ່ນກຳເນີດ ໃຫ້ສະມາຄົມຖິ່ນກຳເນີດ ແລະ ໜ່ວຍງານກວດສອບທີ່ກ່ຽວຂ້ອງ ຈຳນວນ 18 ຄັ້ງ;
- ຈັດຝຶກອົບຮົມ ຮ່ວມກັບ ອົງການອາຫານ ແລະ ກະສິກຳ (FAO) ກ່ຽວກັບ ວຽກງານສົ່ງເສີມການຕະຫຼາດ ໃຫ້ແກ່ຜູ້ປະກອບການ ສິນຄ້າຖິ່ນກຳເນີດ ຈຳນວນ 18 ຄັ້ງ.

## 6. ການຄຸ້ມຄອງວຽກງານຊັບສິນທາງປັນຍາ

ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ. ນອກຈາກນັ້ນກໍຍັງມີ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີໜ້າທີ່ຮັບຜິດຊອບໃນການຮັບຄຳຮ້ອງຂໍຈົດທະບຽນ ເຄື່ອງໝາຍການຄ້າ ແລະ ແບບອຸດສາຫະກຳ, ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ພ້ອມທັງ ສົ່ງເສີມ ແລະ ໂຄສະນາ ໃຫ້ມີການນຳໃຊ້ຊັບສິນທາງປັນຍາໃຫ້ເພີ່ມຂຶ້ນ.

ກົມຊັບສິນທາງປັນຍາ, ມາດຕະຖານ ແລະ ວັດແທກ ໄດ້ຖືກສ້າງຕັ້ງຂຶ້ນໃນປີ 1990 ພາຍໃຕ້ ອົງການວິທະຍາສາດເຕັກໂນໂລຊີ ແລະ ສິ່ງແວດລ້ອມ (STEA) ຮັບຜິດຊອບໃນການຄຸ້ມຄອງວຽກງານ ເຄື່ອງໝາຍການຄ້າ. ໃນປີ 2004, ໄດ້ເລີ່ມຕົ້ນການຄຸ້ມຄອງ ວຽກງານ ສິດທິບັດ, ອະນຸສິດທິບັດ ແລະ ແບບອຸດສາຫະກຳ. ໃນປີ 2008, ໄດ້ເລີ່ມຄຸ້ມຄອງການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ. ໃນເດືອນ ກັນຍາ 2011 ກົມຊັບສິນທາງປັນຍາ ໄດ້ຖືກສ້າງຕັ້ງຂຶ້ນ ພ້ອມກັບການສ້າງຕັ້ງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ. ໃນປີ 2016 ໄດ້ເລີ່ມເປີດຮັບຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ແລະ ໃນປີ 2020 ໄດ້ເລີ່ມເປີດຮັບຄຳຮ້ອງຂໍຈົດທະບຽນພັນພືດໃໝ່. ມາເຖິງເດືອນ ມີນາ 2021, ກົມຊັບສິນທາງປັນຍາ ໄດ້ຖືກຍົກຍ້າຍມາຂຶ້ນກັບກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງມີພາລະບົດບາດ ຄຸ້ມຄອງສິດດ້ານຊັບສິນທາງປັນຍາ ເຊັ່ນ: ສິດທິບັດ, ອະນຸສິດທິບັດ, ແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ຊື່ການຄ້າ, ຄວາມລັບທາງການຄ້າ, ຖິ່ນກຳເນີດ, ແບບຜັງວົງຈອນລວມ, ພັນພືດໃໝ່, ລິຂະ

ສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ລວມທັງ ການສົ່ງເສີມ ແລະ ພັດທະນາ, ການບໍລິການ, ການປົກປ້ອງ ແລະ ການແກ້ໄຂທາງດ້ານບໍລິຫານກ່ຽວກັບການຈົດທະບຽນ ຊັບສິນອຸດສາຫະກຳ, ພັນພືດໃໝ່, ແລະ ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃນຂອບເຂດທົ່ວປະເທດ.

ກົມຊັບສິນທາງປັນຍາປະກອບມີແປດພະແນກ ແລະ ໜຶ່ງສູນ:

- ພະແນກສິດທິບັດ: ຮັບຜິດຊອບໃນການຄຸ້ມຄອງ ກ່ຽວກັບ ສິດທິບັດ, ອະນຸສິດທິບັດ, ແບບອຸດສະຫະ ກຳ , ແບບຜັງວົງຈອນລວມ ແລະ ຄວາມລັບທາງການຄ້າ;
- ພະແນກເຄື່ອງໝາຍການຄ້າ ແລະ ຖິ່ນກຳເນີດ: ຮັບຜິດຊອບໃນການຄຸ້ມຄອງ ກ່ຽວກັບເຄື່ອງໝາຍການຄ້າ , ຊື່ການຄ້າ ແລະ ຖິ່ນກຳເນີດ;
- ພະແນກປົກປ້ອງພັນພືດ: ຮັບຜິດຊອບໃນການຄຸ້ມຄອງ ກ່ຽວກັບການປົກປ້ອງພັນພືດໃໝ່;
- ພະແນກລິຂະສິດ: ຮັບຜິດຊອບໃນການຄຸ້ມຄອງ ກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ລວມທັງອົງການຈັດຕັ້ງລິຂະສິດແບບລວມໝູ່;
- ພະແນກສົ່ງເສີມ ແລະ ພັດທະນາຊັບສິນທາງປັນຍາ: ຮັບຜິດຊອບໃນການຄຸ້ມຄອງ ກ່ຽວກັບການສົ່ງເສີມ ແລະ ພັດທະນາ, ການສຶກສາ ແລະ ສ້າງຈິດສຳນຶກ ທາງດ້ານຊັບສິນທາງປັນຍາ;
- ພະແນກສັງລວມ: ຮັບຜິດຊອບໃນການຄຸ້ມຄອງກ່ຽວກັບ ການພັດທະນາບຸກຄະລາກອນ ແລະ ການວາງແຜນງານ, ໂຄງການ ແລະ ແຜນງົບປະມານຂອງກົມ;
- ພະແນກແກ້ໄຂຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ: ຮັບຜິດຊອບໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນ ຊັບສິນອຸດສາຫະກຳ ແລະ ພັນພືດໃໝ່;
- ພະແນກນະໂຍບາຍ ແລະ ພົວພັນຕ່າງປະເທດ: ຮັບຜິດຊອບໃນການຄຸ້ມຄອງ ກ່ຽວກັບ ນະໂຍບາຍ, ນິຕິກຳ , ການຮ່ວມມືສອງຝ່າຍ, ພາກພື້ນ ແລະ ສາກົນ ທາງດ້ານຊັບສິນທາງປັນຍາ;
- ສູນບໍລິການຊັບສິນທາງປັນຍາ: ຮັບຜິດຊອບໃນການໃຫ້ການ ບໍລິການ, ໃຫ້ຄຳປຶກສາ, ປະຊາສຳພັນ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບຊັບສິນທາງປັນຍາ, ຮັບຄຳຮ້ອງຂໍຮັບ ສິດທິບັດ ແລະ ອະນຸສິດທິບັດ, ຈົດທະບຽນ ຖິ່ນກຳເນີດ, ແບບຜັງວົງຈອນລວມ, ພັນພືດໃໝ່ ແລະ ຮັບຄຳສະເໜີແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນ ຊັບສິນອຸດສາຫະກຳ ແລະ ພັນພືດໃໝ່.

ໃນປີ 2022, ກົມຊັບສິນທາງປັນຍາມີພະນັກງານທັງໝົດ 66 ຄົນ ແລະ ມີພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຊຶ່ງເປັນບ່ອນຮັບຄຳຮ້ອງຂໍຈົດທະບຽນ ເຄື່ອງໝາຍການຄ້າ, ແບບອຸດສາຫະກຳ, ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ຮັບຄຳສະເໜີ ແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ ດ້ານບໍລິຫານ ກ່ຽວກັບ ການຈົດທະບຽນ ຊັບສິນອຸດສາຫະກຳ ແລະ ພັນພືດໃໝ່.

ກົມຊັບສິນທາງປັນຍາ ມີບົດບາດສຳຄັນໃນການພັດທະນາ ແລະ ປະຕິບັດແຜນພັດທະນາຊັບສິນທາງປັນຍາແຫ່ງຊາດ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ກົມຊັບສິນທາງປັນຍາ ຕ້ອງມີຊັບພະຍາກອນທີ່ພຽງພໍ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການປົກປ້ອງຊັບສິນທາງປັນຍາໃນທົ່ວປະເທດ.

## 7. ນິຕິກຳດ້ານຊັບສິນທາງປັນຍາ

ສປປ ລາວ ມີຄວາມຄືບໜ້າໃນການພັດທະນາກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຢ່າງວ່ອງໄວ ເພື່ອເປັນການຍົກລະດັບໃຫ້ທຽບເທົ່າສາກົນ. ຄືກັບຫຼາຍປະເທດ, ນິຕິກຳ ກ່ຽວກັບຊັບສິນທາງປັນຍາ ຂອງ ສປປ ລາວ ແມ່ນເລີ່ມຕົ້ນຈາກການປົກປ້ອງເຄື່ອງໝາຍການຄ້າ ຈາກນັ້ນຈຶ່ງຂະຫຍາຍໄປສູ່ປະເພດອື່ນໆຂອງຊັບສິນທາງປັນຍາ.

ນິຕິກຳທາງດ້ານຊັບສິນທາງປັນຍາ ທີ່ໄດ້ປະກາດໃຊ້ ຢູ່ ສປປ ລາວ ໃນໄລຍະຜ່ານມາຈົນເຖິງປະຈຸບັນ ມີດັ່ງນີ້:

DRAFT

| ຊື່ຂອງນິຕິກຳ | ປີປະກາດໃຊ້ | ຄຳອະທິບາຍ |
|---|---|---|
| ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍເຄື່ອງໝາຍການຄ້າ | 1/1995 | ກຳນົດຂອບວຽກ ເພື່ອການຈົດທະບຽນ ແລະ ການປົກປ້ອງເຄື່ອງໝາຍການຄ້າ |
| ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍສິດທິບັດ, ອານຸສິດທິບັດ ແລະ ແບບອຸດສາຫະກຳ | 1/2002 | ກຳນົດຂອບວຽກ ເພື່ອການຂໍຮັບ ສິດທິບັດ, ອານຸສິດທິບັດ ແລະ ການຈົດທະບຽນ ແບບອຸດສາຫະກຳ ເພື່ອໄດ້ຮັບການປົກປ້ອງ |
| ຂໍ້ຕົກລົງ ວ່າດ້ວຍການຈົດທະບຽນເຄື່ອງໝາຍການຄ້າ | 3/2002 | ກຳນົດຂັ້ນຕອນການຈົດທະບຽນເຄື່ອງໝາຍການຄ້າ |
| ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງປະຕິບັດດຳລັດນາຍົກລັດຖະມົນຕີ ກ່ຽວກັບສິດທິບັດ, ອານຸສິດທິບັດ ແລະ ແບບອຸດສາຫະກຳ | 2/2003 | ກຳນົດຂັ້ນຕອນການຂໍຮັບ ສິດທິບັດ, ອານຸສິດທິບັດ ແລະ ການຈົດທະບຽນແບບອຸດສາຫະກຳ |
| ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເລກທີ 08/ສພຊ | 1/2007 | ກຳນົດຂອບວຽກເພື່ອການປົກປ້ອງ ແລະ ການຄຸ້ມຄອງສິດຕໍ່ຊັບສິນອຸດສາຫະກຳ (ສິດທິບັດ, ອານຸສິດທິບັດ, ແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ, ຖິ່ນກຳເນີດ ແລະ ຄວາມລັບທາງການຄ້າ), ພັນພືດໃໝ່, ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ. |
| ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ເລກທີ 01/ສພຊ | 12/2011 | ແກ້ໄຂ ແລະ ປັບປຸງກົດໝາຍ ວ່າດ້ວຍຊັບສິນທາງປັນຍາໃນປີ 2007 ເພື່ອໃຫ້ສອດຄ່ອງກັບກົດລະບຽບຂອງ ອົງການຊັບສິນທາງປັນຍາໂລກ ແລະ TRIPS. |
| ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ເລກທີ 38/ສພຊ | 11/2017 | ປ່ຽນແທນກົດໝາຍ ວ່າດ້ວຍຊັບສິນທາງປັນຍາເລກທີ 01/ສພຊ ເພື່ອປັບປຸງຂັ້ນຕອນການຈົດທະບຽນໃຫ້ມີຄວາມໂປ່ງໃສ ແລະ ເປັນທຳ, ກຳນົດການແບ່ງໜ້າທີ່ຮັບຜິດຊອບ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ ໃຫ້ຈະແຈ້ງຂຶ້ນ. |

ຕາຕະລາງ 4: ສັງລວມນິຕິກຳດ້ານຊັບສິນທາງປັນຍາ ຂອງ ສປປ ລາວ

DRAFT

## 8. ສະຖິຕິຊັບສິນທາງປັນຍາ

- <u>ເຄື່ອງໝາຍການຄ້າ</u>

ຮູບທີ 1: ຈຳນວນຄຳຮ້ອງຂໍຈົດທະບຽນ ແລະ ການຈົດທະບຽນ ເຄື່ອງໝາຍການຄ້າ ແຕ່ປີ 2015 - 2021




ແຫຼ່ງທີ່ມາ: ກົມຊັບສິນທາງປັນຍາ ([www.dip.gov.la](http://www.dip.gov.la) ວັນທີ 1 ສິງຫາ 2022)

➢ <u>ສິດທິບັດ ແລະ ອະນຸສິດທິບັດ</u>

ຮູບທີ 2: ຈຳນວນຄຳຮ້ອງຂໍຮັບສິດທິບັດ ແລະ ອະນຸສິດທິບັດ ແຕ່ປີ 2015 - 2021




ແຫຼ່ງທີ່ມາ: ກົມຊັບສິນທາງປັນຍາ ([www.dip.gov.la](http://www.dip.gov.la) ວັນທີ 1 ສິງຫາ 2022)

➢ <u>ແບບອຸດສາຫະກຳ</u>

ຮູບທີ 3: ຈຳນວນຄຳຮ້ອງຂໍຈົດທະບຽນ ແລະ ການຈົດທະບຽນ ແບບອຸດສາຫະກຳ ແຕ່ປີ 2015 - 2021




ແຫຼ່ງທີ່ມາ: ກົມຊັບສິນທາງປັນຍາ ([www.dip.gov.la](http://www.dip.gov.la) ວັນທີ 1 ສິງຫາ 2022)

➢ <u>ການແຈ້ງຂໍ້ມູນກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ</u>

ຮູບທີ 4: ຈຳນວນການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ




ແຫຼ່ງທີ່ມາ: ກົມຊັບສິນທາງປັນຍາ

➢ <u>ຄຳສະເໜີແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ</u>

ຮູບທີ 5: ຈຳນວນຄຳສະເໜີ ແລະ ແກ້ໄຂຄຳສະເໜີ




ແຫຼ່ງທີ່ມາ: ກົມຊັບສິນທາງປັນຍາ

ສປປ ລາວ ໄດ້ຮັບການຈັດອັນດັບ Global Innovation Index (GII) ຂອງອົງການຊັບສິນທາງປັນຍາໂລກ ນັບແຕ່ປີ 2020 ເປັນຕົ້ນມາ ຊຶ່ງສປປ ລາວ ໄດ້ຖືກຈັດອັນດັບທີ 113 ໃນປີ 2020, ອັນດັບທີ 117 ຈາກ 132 ປະເທດ ໃນປີ 2021.

ໃນຕໍ່ໜ້າ ສປປ ລາວ ຄວນພິຈາລະນາເຂົ້າຮ່ວມການຈັດຈັດອັນດັບເພາະວ່າການຈັດອັນດັບຈະຊ່ວຍໃຫ້ປະເທດຕິດຕາມຄວາມພະຍາຍາມຂອງຕົນໃນການສ້າງຄວາມຄິດສ້າງສັນ ແລະ ການສ້າງ ແລະ ເພື່ອໃຫ້ມີການສົມທຽບກັບບັນດາປະເທດທີ່ອີງໃສ່ຄວາມຮູ້ທາງດ້ານເສດຖະກິດ.

## 9. ລາຍຮັບເຂົ້າງົບປະມານ

- ລາຍຮັບຄ່າທຳນຽມ ແລະ ບໍລິການຈາກການຮັບຄຳຮ້ອງ ຂໍຈົດທະບຽນ, ຕໍ່ອາຍຸ ແລະ ເອກະສານປ່ຽນແປງຕ່າງໆ ຂອງຊັບສິນອຸດສາຫະກຳ, ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ແຕ່ 1 ມັງກອນ 2011 ຫາ 31 ທັນວາ 2020 ໄດ້ຈຳນວນ 57.727 ຄຳຮ້ອງ ເປັນເງິນຈຳນວນ 45.336.401.000 ກີບ (ສີ່ສິບຫ້າຕື້ສາມຮ້ອຍສາມສິບຫົກລ້ານສີ່ແສນໜຶ່ງພັນກີບຖ້ວນ).
- ລາຍຮັບຄ່າທຳນຽມ ແລະ ບໍລິການ ຈາກການນຮັບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຜ່ານລະບົບມາດຣິດ ແຕ່ເດືອນ ມີນາ 2016 ຫາ ພະຈິກ 2020 ຈຳນວນ 13.814 ໝວດ, ເປັນຈຳນວນເງິນ 1.716.717 ໂດລາ (ໜຶ່ງລ້ານເຈັດແສນສິບຫົກພັນເຈັດຮ້ອຍສິບເຈັດໂດລາສະຫະລັດ).

## III. ຕີລາຄາສະພາບລວມ ການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ປີ 2010-2020

### 1. ດ້ານດີ

ບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ 8 ໄດ້ຊີ້ໃຫ້ເຫັນບາງປັດໃຈສຳຄັນເປັນປະໂຫຍດທີ່ຈະຊ່ວຍໃຫ້ ສປປ ລາວ ບັນລຸເປົ້າໝາຍໃນການພັດທະນາເສດຖະກິດ-ສັງຄົມຕາມແຜນ.ດັ່ງລຸ່ມນີ້:

- ຄວາມໝັ້ນຄົງທາງດ້ານການເມືອງ;
- ປະຕິບັດຕາມກົນໄກເສດຖະກິດຕະຫຼາດ;
- ຄວາມອຸດົມສົມບູນຂອງຊັບພະຍາກອນທຳມະຊາດ (ທີ່ດິນ, ບໍ່ແຮ່, ນ້ຳ ແລະ ປ່າໄມ້);
- ການພັດທະນາຜົນຜະລິດກະສິກຳປອດສານພິດ;
- ການພັດທະນາການທ່ອງທ່ຽວທີ່ມີທ່າແຮງ;
- ການປັບປຸງລະບົບກົດໝາຍໃຫ້ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາ;
- ເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ແລະ ປະຊາຄົມເສດຖະກິດອາຊຽນ.

ສປປ ລາວ ສາມາດຜະລິດເຂົ້າ ແລະ ພືດທັນຍາຫານຕ່າງໆໄດ້ຢ່າງພຽງພໍ ທີ່ຕອບສະໜອງກັບຄວາມຕ້ອງການພາຍໃນ ແລະ ຄວາມຕ້ອງການທີ່ຄາດຄະເນໄວ້. ນອກຈາກນີ້ ສປປ ລາວ ຍັງມີຂໍ້ໄດ້ປຽບເຊັ່ນ: ຄ່າແຮງງານຕ່ຳ ແລະ ແຮງງານຍັງຢູ່ໃນໄວໜຸ່ມໜຸ່ມ. ສປປ ລາວ ມີທີ່ຕັ້ງດ້ານພູມີສາດທີ່ໄດ້ປຽບດ້ານການທ່ອງທ່ຽວ ແລະ ໂອກາດສົ່ງອອກກັບປະເທດໃກ້ຄຽງ (ຈີນ, ໄທ, ຫວຽດນາມ, ກຳປູເຈຍ ແລະ ມຽນມາ).

ມີການທົບທວນກົດໝາຍຊັບສິນທາງປັນຍາຢ່າງຕໍ່ເນື່ອງເພື່ອໃຫ້ຮັບປະກັນວ່າເຂົາເຈົ້າສະໜັບສະໜູນຄວາມປາດຖະໜາໃນການພັດທະນາຂອງປະເທດ. ກົດໝາຍຊັບສິນທາງປັນຍາສະບັບທີ 38/NA ສະບັບປັບປຸງລົງວັນທີ 15 ພະຈິກ 2017, ມີຈຸດປະສົງເພື່ອໃຫ້ ສປປ ລາວ ສາມາດແຂ່ງຂັນໄດ້ຢ່າງມີປະສິດທິພາບຫຼາຍຂຶ້ນຕາມກົດລະບຽບ ແລະ ກົນໄກຂອງເສດຖະກິດຕະຫຼາດສະໄໝໃໝ່. ການປັບປຸງທີ່ສຳຄັນຄືບຸກຄົນທີ່ສາມໄດ້ຮັບສິດຢ່າງເຕັມທີ່ໃນການປົກປ້ອງສິດຊັບສິນທາງປັນຍາຂອງເຂົາເຈົ້າຜ່ານຂັ້ນຕອນການຄັດຄ້ານແທນທີ່ຈະດຳເນີນການຍົກເລີກ. ເຫດຜົນທີ່ຕ້ອງມີການພິສູດຄວາມຜິດພາດທາງອາຍາໄດ້ງ່າຍ ແລະ ຊັດເຈນຂຶ້ນວ່າເຈົ້າໜ້າທີ່ພາສີສາມາດປະຕິບັດໜ້າທີ່ກ່ອນເພື່ອກວດສອບສິນຄ້າທີ່ມີຄວາມໝາຍສຳລັບການສົ່ງອອກ ຫຼື ນຳເຂົ້າ ແລະ ຍຶດສິນຄ້າທີ່ລະເມີດເຄື່ອງໝາຍການຄ້າ, ລິຂະສິດ ແລະ ສິດທີ່ກ່ຽວຂ້ອງກັບລິຂະສິດ.

ຊັບສິນທາງປັນຍາ ມີບົດບາດສຳຄັນໃນການສົ່ງເສີມນະວັດຕະກຳ ເພື່ອດຶງດູດການລົງທຶນ ແລະ ພັດທະນາເສດຖະກິດ., ການເຂົ້າ ຮ່ວມໃນສົນທິສັນຍາດ້ານຊັບສິນທາງປັນຍາທີ່ສຳຄັນຂອງ ສປປ ລາວ ເຊັ່ນ: Universal Copyright Convention, Paris Convention, PCT, Berne Convention, TRIPS ແລະ ອະນຸສັນຍາມາດຣິດ ເປັນສັນຍານບົ່ງບອກເຖິງຄວາມຕັ້ງໝັ້ນຂອງ ສປປ ລາວ ຕໍ່ລະບົບຊັບສິນທາງປັນຍາລະຫວ່າງປະເທດ.

ໃນຖານະສະມາຊິກຂອງອົງການຊັບສິນທາງປັນຍາໂລກ ແລະ ໄດ້ລົງນາມໃນຂໍ້ຕົກລົງທະວິພາຄີ ກັບຫຼາຍປະເທດ ສປປ ລາວ ສາມາດນຳໃຊ້ບໍລິການຂອງ ອົງການຊັບສິນທາງປັນຍາໂລກ ແລະ ສຳນັກງານຊັບສິນທາງປັນຍາອື່ນໆ ເພື່ອຊ່ວຍໃນການ ປັບປຸງລະບົບຊັບສິນທາງປັນຍາ, ປັບປຸງລະບົບອັດຕະໂນມັດ ແລະ ພັດທະນາຂີດຄວາມສາມາດ, ກ້າວຂ້າມສິ່ງທ້າທາຍຕ່າງໆ ຂອງວຽກງານຊັບສິນທາງປັນຍາ.

ໃນດ້ານການພັດທະນາຂີດຄວາມສາມາດຂອງ ສປປ ລາວ ສາມາດເຂົ້າສູ່ສິ່ງອຳນວຍຄວາມສະດວກຂອງສະຖາບັນການສຶກສາຂອງອົງການຊັບສິນທາງປັນຍາໂລກ. ສະຖາບັນການສຶກສາດັ່ງກ່າວ ເປັນສູນກາງຂອງຄວາມ

DRAFT

ເປັນເລີດດ້ານການ ສຶກສາ ແລະ ຝຶກອົບຮົມດ້ານຊັບສິນທາງປັນຍາ ສຳລັບປະເທດສະມາຊິກ ໂດຍສະເພາະໃນປະເທດກຳລັງພັດທະນາ ແລະ ປະເທດດ້ອຍພັດທະນາ. ສະຖາບັນການສຶກສາດັ່ງກ່າວ ເປີດສອນຫຼັກສູດການຮຽນຮູ້ຂັ້ນພື້ນຖານ ແລະ ຂັ້ນສູງຈຳນວນຫຼາຍເພື່ອຕອບສະໜອງກຸ່ມເປົ້າໝາຍທີ່ແຕກຕ່າງ ກັນເຊັ່ນ:

- ຜູ້ກຳນົດນະໂຍບາຍ ແລະ ເຈົ້າໜ້າທີ່ຂອງລັດ;
- ນັກປະດິດສ້າງ, ນັກປະດິດຄິດແຕ່ງ ແລະ ຜູ້ສ້າງສັນ;
- ຜູ້ຈັດການທຸລະກິດ ແລະ ຜູ້ຊ່ຽວຊານດ້ານຊັບສິນທາງປັນຍາ;
- ນັກຮຽນ, ນັກສຶກສາ ແລະ ຄູ-ອາຈານດ້ານຊັບສິນທາງປັນຍາ;
- ສາທາລະນະຊົນທົ່ວໄປ.

ຫຼັກສູດນີ້ເປີດສອນຟຣີ ສຳລັບພະນັກງານລັດທຸກຄົນ (ລວມເຖິງສຳນັກງານຊັບສິນທາງປັນຍາ) ໃນປະເທດກຳລັງພັດທະນາ, ປະເທດດ້ອຍພັດທະນາ ແລະ ປະເທດທີ່ຢູ່ລະຫວ່າງໄລຍະຂ້າມຜ່ານ.[1]

## 2. ຈຸດຄົງຄ້າງ

ຂໍ້ຄົງຄ້າງທີ່ໄດ້ກ່າວມາຂ້າງເທິງນັ້ນໄດ້ສະທ້ອນໃຫ້ເຫັນການນຳໃຊ້ລະບົບຊັບສິນທາງປັນຍາໃນລະດັບທີ່ຕ່ຳຂອງປະຊາຊົນໃນ ສປປ ລາວ ເຊັ່ນ:

- ການຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບບົດບາດຂອງຊັບສິນທາງປັນຍາໃນທຸກຂະແໜງການເສດຖະກິດຢູ່ ສປປ ລາວ ຍັງຢູ່ໃນລະດັບຕ່ຳ;
- ຫົວໜ່ວຍທຸລະກິດໃນຂະແໜງບໍລິການ ແລະ ຂາຍຍ່ອຍສ່ວນຫຼາຍແມ່ນປະກອບດ້ວຍທຸລະກິດຂະໜາດຈຸລະພາກ ຊຶ່ງມີຄວາມຫຍຸ້ງຍາກທີ່ຈະເຂົ້າເຖິງການເຜີຍແຜ່ຄວາມຮູ້ທາງດ້ານຊັບສິນທາງປັນຍາ ແລະ ມີຂີດຄວາມສາມາດຈຳກັດໃນການນຳໃຊ້ລະບົບຊັບສິນທາງປັນຍາ.
- ຂາດຍຸດທະສາດທາງດ້ານຊັບສິນທາງປັນຍາ, ຊຶ່ງນຳໄປສູ່ການພັດທະນາຊັບສິນທາງປັນຍາດ້ວຍທິດທາງທີ່ບໍ່ຊັດເຈນ;
- ການພັດທະນາບຸກຄະລາກອນ ບໍ່ເປັນລະບົບຕໍ່ເນື່ອງ
- ຍັງຂາດຫຼັກສູດ ການຮຽນ-ການສອນ ວຽກງານຊັບສິນທາງປັນຍາ ຢ່າງເປັນລະບົບ
- ກົນໄກການແກ້ໄຂທາງດ້ານບໍລິຫານ ແລະ ການລະເມີດ ຍັງບໍ່ມີປະສິດທິຜົນເທົ່າທີ່ຄວນ
- ການບໍລິການທາງດ້ານຊັບສິນທາງປັນຍາ ຍັງບໍ່ຄອບຄຸມໃນຂອບເຂດທົ່ວປະເທດ

## 3. ໂອກາດ

- ການຜະລິດກະສິກຳເປັນສິນຄ້າກັບປະເທດໃກ້ຄຽງ ແມ່ນມີການພັດທະນາຢ່າງຕໍ່ເນື່ອງ (ໂດຍສະເພາະກັບປະເທດຈີນ) ໂດຍການຊອກຫາປະເທດນຳເຂົ້າຜະລິດຕະພັນກະສິກຳ ຈາກ ສປປ ລາວ.
- ສປປ ລາວ ຍັງບໍ່ທັນໄດ້ພັດທະນາ ຕະຫຼາດການທ່ອງທ່ຽວຖ້າທຽບໃສ່ທ່າແຮງໃນການຂະຫຍາຍຕົວທີ່ສຳຄັນຈາກປະເທດເພື່ອນບ້ານໃກ້ຄຽງເຊັ່ນ: ປະເທດຈີນ, ຫວຽດນາມ ແລະ ໄທ ແລະ ພ້ອມດຽວກັນນັ້ນແມ່ນຈາກບັນດາປະເທດໃນແຖບເອີຣົບ ແລະ ອາເມຣິກາເໜືອທີ່ມີຄວາມພ້ອມ.
- ຄຸນນະພາບຂອງການທ່ອງທ່ຽວທີ່ມີທ່າແຮງຢູ່ ສປປ ລາວ ສາມາດໄດ້ຮັບການປັບປຸງການບໍລິການດ້ານການທ່ອງທ່ຽວໃຫ້ມີຄຸນນະພາບດີຂຶ້ນການນຳໃຊ້ເຄື່ອງໝາຍຮັບຮອງ ແລະ ເຄື່ອງໝາຍລວມໝູ່ລວມທັງຖິ່ນກຳເນີດຢ່າງເໝາະສົມ ທີ່ເປັນທ່າແຮງ ໃນການສະໜັບສະໜູນການຮອງຮັບອຸດສະຫະກຳທ່ອງທ່ຽວ. ຖິ່ນກຳເນີດ ຫຼື ເຄື່ອງໝາຍຮັບຮອງສາມາດສະໜັບສະໜູນການສ້າງຍີ່ຫໍ້ສິນຄ້າ ແລະ ການຕະຫຼາດຂອງ

[1]WIPO Academy http://www.wipo.int/academy/en/

DRAFT

ຜະລິດຕະພັນກະສິກຳຫຼັກເພື່ອສົ່ງອອກເຊັ່ນ: ກາເຟ, ພັນເຂົ້າພິເສດ ແລະ ຜະລິດຕະພັນກະສິກຳທີ່ເປັນເອກະລັກ.

- ອຸດສະຫະກຳປຸງແຕ່ງໄດ້ຮັບການຂະຫຍາຍຕົວແຮງໃນຫ້າປີຜ່ານມາຊຶ່ງສາມາດສະໜອງຄວາມຕ້ອງການທັງຕະຫຼາດພາຍໃນ ແລະ ຕ່າງປະເທດໂດຍມີທ່າແຮງຂະຫຍາຍຕົວຢ່າງຕໍ່ເນື່ອງຍ້ອນມີການຈັດຕັ້ງປະຕິບັດນະໂຍບາຍ ທີ່ຖືເອົາຕະຫຼາດເປັນໃຈກາງ;
- ອຸດສະຫະກຳຫັດຖະກຳຢູ່ ສປປ ລາວ ມີທ່າແຮງຫຼາຍໃນການພັດທະນາໃນອານາຄົດໂດຍສະເພາະແມ່ນຄວາມຫຼາກຫຼາຍທາງດ້ານຊົນເຜົ່າຂອງປະເທດ ແລະ ມີປະເພນີທີ່ຍາວນານໂດຍສະເພາະແມ່ນການຕໍ່າຜ້າທໍໄໝ.
- ການໃຊ້ເຄື່ອງໝາຍຮັບຮອງ (ແລະ ຖິ່ນກຳເນີດທີ່ເປັນໄປໄດ້) ສາມາດປັບປຸງການຕະຫຼາດຫັດຖະກຳດັ້ງເດີມໃນຕະຫຼາດການທ່ອງທ່ຽວທັງພາຍໃນ ແລະ ສຳລັບສົ່ງອອກ.
- ສປປ ລາວ ມີຄວາມພ້ອມທີ່ຈະໃຊ້ປະໂຫຍດຈາກຄວາມຕ້ອງການທີ່ເພີ່ມຂຶ້ນຂອງຕະຫຼາດສິນຄ້າກະສິກຳປອດສານພິດແລະນຳໃຊ້ເຕັກໂນໂລຊີທີ່ເປັນມິດກັບສິ່ງແວດລ້ອມເພື່ອສະໜັບສະໜູນການພັດທະນາສີຂຽວໂດຍສະເພາະໃນເຂດຊົນນະບົດ.

## 4. ອຸປະສັກ

ມີອຸປະສັກບາງຢ່າງທີ່ມີລັກສະນະສະເພາະທີ່ສາມາດລະບຸໄດ້ຊຶ່ງຈະເປັນຂໍ້ຈຳກັດໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາຊັບສິນທາງປັນຍາ ລວມມີ:

- ຂາດການປະສານງານທີ່ພຽງພໍຂອງບັນດາອົງການພາກລັດໃນການໃຊ້ລະບົບຊັບສິນທາງປັນຍາ ໃຫ້ເກີດປະໂຫຍດສູງສຸດເພື່ອສະໜັບສະໜູນແນວທາງຂອງລັດຖະບານ;
- ຊັບພະຍາກອນຍັງບໍ່ພຽງພໍເພື່ອເອື້ອອຳນວຍໃຫ້ແກ່ກົມຊັບສິນທາງປັນຍາ (ແລະ ອົງການຈັດຕັ້ງພາກລັດອື່ນໆ) ເພື່ອເຮັດໜ້າທີ່ຮັບຜິດຊອບທີ່ລະບຸໄວ້ໃນແຜນພັດທະນາຊັບສິນທາງປັນຍາ;
- ຂີດຄວາມສາມາດໃນການບໍລິຫານຍັງບໍ່ຄົບຖ້ວນໃນກົມຊັບສິນທາງປັນຍາເພື່ອມາຈັດຕັ້ງປະຕິບັດຫຼາຍກິດຈະກຳ ທີ່ສະເໜີຈາກບໍລິສັດຕົວແທນພາຍໃນໄລຍະເວລາອັນສັ້ນ.
- ຂາດປະສົບປະການ ແລະ ທັກສະໃນການແກ້ໄຂຄະດີທາງດ້ານຊັບສິນທາງປັນຍາ ໃນຂົງເຂດຕຸລາການເຮັດໃຫ້ພາກທຸລະກິດຂາດຄວາມເຊື່ອໝັ້ນໃນການບັງຄັບໃຊ້ສິດທາງດ້ານຊັບສິນທາງປັນຍາ ຢູ່ ສປປ ລາວ;
- ກົມຊັບສິນທາງປັນຍາ ຍັງຂາດບຸກຄະລາກອນທີ່ມີຄວາມຊຳນານ (ນັກກວດສອບ, ຜູ້ຄຸ້ມຄອງເຕັກໂນໂລຊີຂໍ້ມູນຂ່າວສານ, ການບໍລິຫານທົ່ວໄປ, ກົດໝາຍ, ການຄຸ້ມຄອງ ແລະ ການຄຸ້ມຄອງ ຊັບພະຍາກອນມະນຸດ)ເປັນໄພຂົ່ມຂູ່ຕໍ່ຄວາມເຊື່ອໝັ້ນຂອງພາກທຸລະກິດໃນລະບົບຊັບສິນທາງປັນຍາ.
- ຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດແຜນງານທີ່ໄດ້ສະເໜີໄວ້ໃນຍຸດທະສາດດ້ານຊັບສິນທາງປັນຍາໃຫ້ມີຄວາມສົມດຸນໃນຕົວເມືອງ ແລະ ຊົນນະບົດອາດສົ່ງຜົນເສຍຕໍ່ຄວາມຄືບໜ້າຂອງການບັນລຸເປົ້າໝາຍຂອງການພັດທະນາແຫ່ງຊາດໃນຂັ້ນສູນກາງ ແລະ ທ້ອງຖິ່ນ;
- ການຈັດຕັ້ງປະຕິບັດແຜນງານຢ່າງມີປະສິດທິຜົນສຳລັບວິສາຫະກິດຂະໜາດຈຸລະພາກ, ນ້ອຍ ແລະ ກາງ (MSMEs) ຊຶ່ງເປັນຂະແໜງການທີ່ໃຫຍ່ທີ່ສຸດຂອງເສດຖະກິດລາວ ແລະ ປະຕິບັດງານໂດຍແມ່ຍິງຈຶ່ງເປັນສິ່ງທ້າທາຍທີ່ສຳຄັນຕໍ່ການພັດທະນາລະບົບຊັບສິນທາງປັນຍາຢູ່ໃນປະເທດ;
- ບໍ່ພິຈາລະນາເຖິງຄວາມຍືດຫົດ ແລະ ຂໍ້ຈຳກັດ ທັງໝົດໂດຍສະເພາະໃນດ້ານລິຂະສິດ ແລະ ສິດທິບັດ ທີ່ໄດ້ຮັບອະນຸຍາດພາຍໃຕ້ TRIPS;

DRAFT

- ຂາດນະໂຍບາຍດ້ານຊັບສິນທາງປັນຍາສໍາລັບສະຖາບັນວິໄຈ ແລະ ພັດທະນາຂອງລັດ ແລະ ມະຫາວິທະຍາໄລທີ່ດໍາເນີນການວິໄຈທີ່ໄດ້ຮັບທຶນຈາກລັດຖະບານ;
- ພາກເອກະຊົນຢູ່ໃນລະບົບເສດຖະກິດຂອງ ສປປ ລາວ (ທຸລະກິດຂາຍຍ່ອຍ, ການທ່ອງທ່ຽວ, ອຸດສາຫະກໍາປຸງແຕ່ງ, ອຸດສະກໍາປະດິດຄິດແຕ່ງ) ມີຂີດຄວາມສາມາດດ້ານສະຖາບັນບໍ່ທັນພຽງພໍທີ່ຈະເຮັດວຽກຮ່ວມກັບລັດຖະບານໃນການຈັດຕັ້ງປະຕິບັດຍຸດທະສາດທີ່ຈໍາເປັນໃນຂະແໜງຂອງຕົນ.

ໃນການສ້າງມາດຕະການ ແລະ ກິດຈະກໍາເພື່ອຈັດຕັ້ງປະຕິບັດແຜນພັດທະນາຊັບສິນທາງປັນຍາ, ຕ້ອງຍອມຮັບ ແລະ ຫຼຸດຜ່ອນຜົນກະທົບທີເກີດຈາກອຸປະສັກເຫຼົ່ານີ້ຢ່າງເໝາະສົມ.

## 5. ບົດຮຽນທີ່ຖອດຖອນໄດ້

### 5.1 ສາເຫດທີ່ພາໃຫ້ມີດ້ານດີ

- ປັບປຸງວຽກງານຊັບສິນທາງປັນຍາ ແລະ ໂຄງລ່າງພື້ນຖານແມ່ນໜຶ່ງໃນວຽກບຸລິມະສິດຂອງລັດຖະບານ;
- ສປປ ລາວ ມີການຂະຫຍາຍຕົວທາງດ້ານເສດຖະກິດຢ່າງຕໍ່ເນື່ອງ;
- ການພັດທະນາສິດທາງດ້ານຊັບສິນທາງປັນຍາຢູ່ໃນພາກພື້ນ ແລະ ສາກົນ ໄດ້ກະຕຸກຊຸກຍູ້ໃຫ້ມີການພັດທະນາສິດຊັບສິນທາງປັນຍາຢ່າງກ້າວໜ້າຢູ່ໃນ ສປປ ລາວ.

### 5.2 ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ

- ລະບຽບການຄຸ້ມຄອງຊັບສິນທາງປັນຍາ ຍັງບໍ່ພຽງພໍ ເຊັ່ນ: ການແກ້ໄຂຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ, ແລະ ການຄຸ້ມຄອງບໍລິສັດຕົວແທນບໍລິການຈົດທະບຽນຊັບສິນທາງປັນຍາ;
- ສປປ ລາວ ມີພື້ນຖານເສດຖະກິດຂະໜາດນ້ອຍ, ທຸລະກິດສ່ວນໃຫຍ່ແມ່ນ ວິສະຫະກິດຂະໜາດຈຸລະພາກ, ນ້ອຍ ແລະ ກາງ ມີຄວາມສາມາດໃນການແຂ່ງຂັນທີ່ຈໍາກັດ;
- ຂາດຫຼັກສູດການຮຽນ-ການສອນ ກ່ຽວກັບ ຊັບສິນທາງປັນຍາ ຢູ່ໃນສະຖາບັນການສຶກສາ;
- ການເຂົ້າເຖິງຂໍ້ມູນດ້ານຊັບສິນທາງປັນຍາ ສໍາລັບການຄົ້ນຫາຂໍ້ມູນເບື້ອງຕົ້ນ ແລະ ວິທີການປົກປ້ອງສິດຊັບສິນທາງປັນຍາ ແລະ ແຮງຈູງໃຈ ໃຫ້ແກ່ນັກຄົ້ນຄວ້າວິທະຍາສາດ, ຜູ້ລົງທຶນ ແລະ ຜູ້ຖືສິດທາງດ້ານຊັບສິນທາງປັນຍາ ຍັງບໍ່ພຽງພໍ;
- ອົງການຄຸ້ມຄອງຊັບສິນທາງປັນຍາ ແລະ ອົງການບັງຄັບໃຊ້ກົດໝາຍ ຍັງຂາດຊັບພະຍາກອນມະນຸດ ແລະ ບຸກຄະລາກອນທາງດ້ານຊັບສິນທາງປັນຍາທີ່ມີຄວາມຮູ້, ຄວາມສາມາດທີ່ເໝາະສົມ ເພື່ອຂະຫຍາຍການບໍລິການ ແລະ ການປະຕິບັດງານ;
- ກົນໄກການປະສານງານ ລະຫວ່າງ ອົງການຄຸ້ມຄອງຊັບສິນທາງປັນຍາ ແລະ ອົງການບັງຄັບໃຊ້ກົດໝາຍ ຍັງບໍ່ທັນມີປະສິດທິຜົນເທົ່າທີ່ຄວນ.

### 5.3 ບົດຮຽນທີ່ຖອດຖອນໄດ້

ຜ່ານການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາຢູ່ ສປປ ລາວ ໃນໄລຍະ 10 ປີ (2010 -2020) ສາມາດຖອດຖອນບົດຮຽນໄດ້ ດັ່ງນີ້:

- ການພັດທະນາທາງດ້ານຊັບສິນທາງປັນຍາ ຄວນສອດຄ່ອງກັບ ວາລະ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
- ການສ້າງຂີດຄວາມສາມາດຂອງບຸກຄະລາກອນທາງດ້ານຊັບສິນທາງປັນຍາຂອງພາກລັດ ແລະ ພາກເອກະຊົນ ຄວນຖືເປັນວຽກງານບູລິມະສິດ ເພື່ອໝູນໃຊ້ເຂົ້າໃນການພັດທະນາລະບົບຊັບສິນທາງປັນຍາ;

- ສ້າງ ແລະ ຈັດຕັ້ງປະຕິບັດ ກົນໄກຄຸ້ມຄອງລະບົບຊັບສິນທາງປັນຍາຢ່າງມີປະສິດທິຜົນແຕ່ສູນກາງຮອດທ້ອງຖິ່ນ;
- ສ້າງໂຄງການຕ່າງໆ ເພື່ອສະໜັບສະໜູນ ການຄົ້ນຄວ້າ-ພັດທະນາ ການປະດິດສ້າງ ແລະ ການປະດິດຄິດແຕ່ງ ນະວັດຕະກໍາຂອງສະຖາບັນທີ່ຂຶ້ນກັບລັດຖະບານ;
- ສົ່ງເສີມການສ້າງຫ້ອງການຖ່າຍທອດເຕັກໂນໂລຊີ ເພື່ອອໍານວຍຄວາມສະດວກ ໃນການປົກປ້ອງ ແລະສະແຫວງຫາຜົນປະໂຫຍດ  ຈາກຜົນການຄົ້ນຄວ້າ-ພັດທະນາ ແລະ ນະວັດຕະກໍາ ຂອງສະຖາບັນທີ່ຂຶ້ນກັບລັດຖະບານ;
- ພັດທະນາ ແລະ ປັບປຸງນິຕິກໍາທາງດ້ານຊັບສິນທາງປັນຍາໃຫ້ເປັນລະບົບຄົບຊຸດ;
- ນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານທີ່ທັນສະໄໝ ເພື່ອໃຫ້ບໍລິການທາງດ້ານຊັບສິນທາງປັນຍາທີ່ມີຄຸນະພາບ ແລະ ວ່ອງໄວ;
- ຈັດລຽງບູລິມະສິດ ການພັດທະນາວຽກງານຊັບສິນທາງປັນຍາ ໂດຍມີແຜນການ, ແຜນງານ ແລະ ແຜນກິດຈະກໍາ ການສ້າງຈິດສໍານຶກໃຫ້ບັນດາ ຜູ້ກໍານົດນະໂຍບາຍ, ນັກກົດໝາຍ, ນັກປະດິດສ້າງ, ນັກປະດິດຄິດແຕ່ງ ລວມທັງສາທາລະນະຊົນທົ່ວໄປ;
- ສ້າງ ແລະ ນໍາໃຊ້ ຫຼັກສູດຊັບສິນທາງປັນຍາ ເຂົ້າໃນການຮຽນ-ການສອນ ຢູ່ໃນສະຖາບັນການສຶກສາ;
- ເພີ່ມທະວີການຮ່ວມມືຕ່າງປະເທດ ໃນພາກພື້ນ ແລະ ສາກົນ ກ່ຽວກັບຊັບສິນທາງປັນຍາທີ່ມີຜົນປະໂຫຍດຕໍ່ ສປປ ລາວ ເພື່ອດຶງດູດ ການລົງທຶນ, ການຄ້າ ແລະ ການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ວິຊາການ ໂດຍຜ່ານການແລກປ່ຽນບົດຮຽນ ແລະ ປະສົບການ.

DRAFT

# ພາກທີ II: ແຜນພັດທະນາວຽກງານຊັບສິນທາງປັນຍາ ແລະ ວິໄສທັດ ຮອດປີ 2030

## I. ວິໄສທັດ ແລະ ເປົ້າໝາຍລວມ

ເພື່ອໃຫ້ບັນລຸຕາມມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ຕາມແຜນພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ (2021-2025) ຜ່ານ:

- ການພັດທະນາລະບົບຊັບສິນທາງປັນຍາເພື່ອສະໜັບສະໜູນການພັດທະນາ ເສດຖະກິດ-ສັງຄົມ ໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ;
- ຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ;
- ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຂອງສະຫະປະຊາຊາດໃນປີ 2030 ໃນ ສປປ ລາວ.

### 1. ວິໄສທັດ ຮອດປີ 2030

ສ້າງຊັບສິນທາງປັນຍາ ເປັນແຮງຊຸກຍູ້ ການພັດທະນາ ນະວັດຕະກຳ, ເຕັກໂນໂລຊີ, ການເຕີບໂຕທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທຳ ຂອງ ສປປ ລາວ.

### 2. ເປົ້າໝາຍລວມ

ການພັດທະນາລະບົບຊັບສິນທາງປັນຍາຂອງ ສປປ ລາວ ຕ້ອງປະຕິບັດຕາມຄາດໝາຍສູ້ຊົນ ຂອງມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ຍຸດທະສາດການພັດທະນາ ອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ 2016-2025 ແລະ ວິໄສທັດ ຮອດປີ 2030 ແລະ ແຜນພັດທະນາຊັບສິນທາງປັນຍາ ຮອດປີ 2025 ແລະ ວິໄສທັດ 2030 ເພື່ອສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທຳຂອງ ສປປ ລາວ ແບບຍືນຍົງ ແລະ ສີຂຽວ ດັ່ງນີ້:

1) ສ້າງ ແລະ ປັບປຸງ ກົນໄກການຄຸ້ມຄອງ ແລະ ພື້ນຖານໂຄງລ່າງຂອງວຽກງານຊັບສິນທາງປັນຍາ ໃຫ້ເປັນລະບົບຄົບຊຸດ ທັງສູນກາງ ແລະ ທ້ອງຖິ່ນ ຜ່ານນະໂຍບາຍ, ຍຸດທະສາດ, ນິຕິກຳ, ແຜນງານ ແລະ ໂຄງການ ເພື່ອຈັດຕັ້ງປະຕິບັດໃຫ້ເປັນເອກະພາບໃນທົ່ວປະເທດ;
2) ເພີ່ມທະວີການສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບວຽກງານຊັບສິນທາງປັນຍາໃຫ້ແກ່ສາທາລະນະຊົນ, ທຸລະກິດ ແລະ ສະຖາບັນການສຶກສາຢ່າງກວ້າງຂວາງໃນຂອບເຂດທົ່ວປະເທດ ຜ່ານການໂຄສະນາເຜີຍແຜ່ຢ່າງມີປະສິດທິຜົນ;
3) ສົ່ງເສີມການນຳໃຊ້ວຽກງານຊັບສິນທາງປັນຍາ ໃຫ້ກາຍເປັນເຄື່ອງມືທີ່ເອື້ອອຳນວຍໃຫ້ແກ່ການພັດທະນາທຸລະກິດ ໂດຍການນຳໃຊ້ຊັບສິນທາງປັນຍາ ໃນສະຖາບັນການສຶກສາ, ສະຖາບັນຄົ້ນຄວ້າ-ວິໄຈ ແລະ ວິສາຫະກິດ ຂະແໜງ ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການຄ້າ, ການບໍລິການ ແລະ ວັດທະນະທຳ;
4) ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການ ທີ່ຕິດພັນກັບວຽກງານຊັບສິນທາງປັນຍາ ເພື່ອຮັບປະກັນຄຸນະພາບຂອງການໃຫ້ບໍລິການຊັບສິນທາງປັນຍາ ແກ່ສາທາລະນະຊົນ;
5) ຍົກລະດັບການບໍລິການວຽກງານຊັບສິນທາງປັນຍາ ໂດຍການນຳໃຊ້ເຕັກໂນໂລຊີເຂົ້າໃນການຄຸ້ມຄອງ ແລະ ບໍລິການດ້ານຊັບສິນທາງປັນຍາ ໃຫ້ທັນສະໄໝ, ສະດວກ, ວ່ອງໄວ ແລະ ໂປ່ງໃສ;
6) ສ້າງ ແລະ ປັບປຸງກົນໄກ ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ວຽກງານຊັບສິນທາງປັນຍາ ລວມທັງກົນໄກການບັງຄັບໃຊ້ກົດໝາຍຊັບສິນທາງປັນຍາ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍຸຕິທຳ;

7) ເພີ່ມທະວີການຮ່ວມມື ແລະ ເຊື່ອມໂຍງ ວຽກງານຊັບສິນທາງປັນຍາກັບບັນດາປະເທດໃນພາກພື້ນ ແລະ ສາກົນ ແລະ ປະຕິບັດໃຫ້ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## II. ແຜນງານການພັດທະນາຊັບສິນທາງປັນຍາ ຮອດປີ 2025

ເພື່ອເຮັດໃຫ້ບັນລຸໄດ້ ວິໄສທັດຮອດປີ 2030 ຂອງວຽກງານຊັບສິນທາງປັນຍາ, ກົມຊັບສິນທາງປັນຍາໄດ້ກຳນົດບັນດາແຜນງານ ແລະ ກິດຈະກຳ ທີ່ຈະຈັດຕັ້ງປະຕິບັດຮອດປີ 2025 ຊຶ່ງໄດ້ກຳນົດ 07 ແຜນງານດັ່ງນີ້:

**ແຜນງານ 1: ສ້າງ ແລະ ປັບປຸງກົນໄກການຄຸ້ມຄອງ ວຽກງານຊັບສິນທາງປັນຍາ ໃຫ້ເປັນລະບົບຄົບຊຸດ ທັງສູນກາງ ແລະ ທ້ອງຖິ່ນ ຜ່ານນະໂຍບາຍ, ຍຸດທະສາດ, ນິຕິກຳ, ແຜນງານ ແລະ ໂຄງການ ເພື່ອຈັດຕັ້ງປະຕິບັດໃຫ້ເປັນເອກະພາບໃນທົ່ວປະເທດ**

### 1. ເປົ້າໝາຍ

ປັບປຸງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງຕ່າງໆ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ຂະແໜງຊັບສິນທາງປັນຍາຂັ້ນທ້ອງຖິ່ນ ແລະ ສ້າງກອງທຶນຊັບສິນທາງປັນຍາ.

### 2. ຕົວຊີ້ວັດ

- ສຳເລັດການປັບປຸງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃນປີ 2023;
- ສຳເລັດການປັບປຸງຂໍ້ຕົກລົງ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຈຳນວນ 09 ສະບັບ ໃນປີ 2025;
- ສຳເລັດຄູ່ມືການຮັບຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ການແຈ້ງຂໍ້ມູນລິຂະສິດ ແລະ ຄຳສະເໜີແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;
- ສຳເລັດຄູ່ມືການກວດສອບເບື້ອງຕົ້ນ ຊັບສິນອຸດສາຫະກຳ ແລະ ພັນພືດໃໝ່;
- ສຳເລັດຄູ່ມືການກວດສອບເນື້ອໃນ ຊັບສິນອຸດສາຫະກຳ ແລະ ພັນພືດໃໝ່;
- ສ້າງກອງທຶນຊັບສິນທາງປັນຍາ.

### 3. ວຽກຈຸດສຸມ

- ປັບປຸງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃນປີ 2023;
- ປັບປຸງຂໍ້ຕົກລົງ ເພື່ອຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຈຳນວນ 08 ສະບັບ ໃນປີ 2025;
- ສ້າງຄູ່ມືການຮັບຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ການແຈ້ງຂໍ້ມູນລິຂະສິດ ແລະ ຄຳສະເໜີແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ;
- ສ້າງຄູ່ມືການກວດສອບເບື້ອງຕົ້ນ ຊັບສິນອຸດສາຫະກຳ ແລະ ພັນພືດໃໝ່;
- ສ້າງຄູ່ມືການກວດສອບເນື້ອໃນ ຊັບສິນອຸດສາຫະກຳ ແລະ ພັນພືດໃໝ່;
- ສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານຂັ້ນທ້ອງຖິ່ນ ກ່ຽວກັບ ການຮັບຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບ ການຈົດທະບຽນ ຜ່ານການຝຶກອົບຮົມ, ຊຸກຍູ້ແລະຕິດຕາມການຈັດຕັ້ງປະຕິບັດຕົວຈິງ;
- ສຶກສາຄົ້ນຄວ້າຄວາມເປັນໄປໄດ້ໃນການພັດທະນາລະບົບຮັກສາຄວາມປອດໄພ ໃນການເຂົ້າເຖິງຂໍ້ມູນເອກະສານ ການຈົດທະບຽນຊັບສິນທາງປັນຍາ ໂດຍສົມທຽບກັບຕ່າງປະເທດ,

DRAFT

- ສ້າງນິຕິກຳຊັບສິນທາງປັນຍາ ເພື່ອປົກປ້ອງ ຊັບພະຍາກອນພັນທຸກຳທາງຊັບສິນທາງປັນຍາ, ພູມປັນຍາອັນເປັນມູນເຊື້ອ ແລະ ການສະແດງອອກທາງດ້ານວັດທະນາທຳພື້ນເມືອງ (GRTKTCE).

**<u>ແຜນງານ 2</u>: ເພີ່ມທະວີການສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບ ວຽກງານຊັບສິນທາງປັນຍາໃຫ້ແກ່ສາທາລະນະຊົນຢ່າງກວ້າງຂວາງໃນຂອບເຂດທົ່ວປະເທດ ຜ່ານການໂຄສະນາເຜີຍແຜ່ຢ່າງມີປະສິດທິຜົນ**

1. **ເປົ້າໝາຍ**

ສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ວຽກງານຊັບສິນທາງປັນຍາ ໃຫ້ທັງພາກລັດ, ທຸລະກິດ ແລະ ສະຖາບັນການສຶກສາ ໃນຂອບເຂດທົ່ວປະເທດ.

2. **ຕົວຊີ້ວັດ**

- ສຳເລັດການຈັດສຳມະນາ ເພື່ອເຜີຍແຜ່ຄວາມຮູ້ພື້ນຖານດ້ານຊັບສິນທາງປັນຍາ ໃຫ້ສາທາລະນະຊົນຮັບຊາບ ຢ່າງໜ້ອຍ 3 ຄັ້ງ/ປີ ໂດຍມີຜູ້ເຂົ້າຮ່ວມທັງໝົດ 200 ຄົນ/ປີ;
- ສຳເລັດຄູ່ມືການເຜີຍແຜ່ວຽກງານຊັບສິນທາງປັນຍາ ຢ່າງໜ້ອຍ 11 ຂົງເຂດ;
- ສຳເລັດສ້າງວິຊາຮຽນ ຫຼື ຕຳລາ ກ່ຽວກັບ ຊັບສິນທາງປັນຍາ ເພື່ອນຳໃຊ້ເຂົ້າໃນການສິດສອນ ຢ່າງໜ້ອຍໃນມະຫາວິທະຍາໄລແຫ່ງຊາດ ພາກກາງ, ພາກໃຕ້ ແລະ ພາກເໜືອ.

3. **ວຽກຈຸດສຸມ**

- ຈັດສຳມະນາ ແລະ ໂຄສະນາເຜີຍແຜ່ຜ່ານສື່ສັງຄົມອອນລາຍ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບວຽກງານຊັບສິນທາງປັນຍາໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງຂອງແຕ່ລະຂະແໜງການ;
- ຈັດງານມະຫາກຳຊັບສິນທາງປັນຍາ ແລະ ສະເຫຼີມສະຫຼອງວັນຊັບສິນທາງປັນຍາໂລກໃນແຕ່ລະປີ;
- ຄູ່ມືການເຜີຍແຜ່ວຽກງານຊັບສິນທາງປັນຍາ ຢ່າງໜ້ອຍ 11 ຂົງເຂດ;
- ສ້າງບົດບັນທຶກສາມຝ່າຍກັບ ມະຫາວິທະຍາໄລແຫ່ງຊາດ ແລະ ກົມການສຶກສາຊັ້ນສູງ ເພື່ອນຳເອົາວຽກງານຊັບສິນທາງປັນຍາ ເຂົ້າໃນສະຖາບັນການສຶກສາ;
- ສ້າງວິຊາຊັບສິນທາງປັນຍາເຂົ້າໃນຫຼັກສູດການຮຽນ-ການສອນ ໃນການສຶກສາຊັ້ນສູງ ເປັນຕົ້ນວິທະຍາໄລ, ມະຫາວິທະຍາໄລ ແລະ ສະຖາບັນການສຶກສາ;
- ສ້າງຄວາມຮັບຮູ້ ແລະ ເຄົາລົບສິດຕໍ່ຊັບສິນທາງປັນຍາ ໃຫ້ແກ່ສັງຄົມ ເພື່ອສົ່ງເສີມການປົກປ້ອງ ແລະ ການໃຊ້ປະໂຫຍດທາງດ້ານຊັບສິນທາງປັນຍາ ລວມທັງການສະໜັບສະໜູນໂຄງການຕ່າງໆ ສຳລັບຈຸນລະວິສາຫະກິດ, ວິສາຫະກິດຂະໜາດ ນ້ອຍ ແລະ ກາງ ແລະ ຂະແໜງການຄວາມຄິດສ້າງສັນ.

**<u>ແຜນງານ 3:</u> ເພີ່ມທະວີການນຳໃຊ້ຊັບສິນທາງປັນຍາ ໃນສະຖາບັນການສຶກສາ, ສະຖາບັນຄົ້ນຄວ້າວິໄຈ ແລະ ວິສາຫະກິດ ຂະແໜງ ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການຄ້າ, ການບໍລິການ ແລະ ວັດທະນະທຳ**

1. **ເປົ້າໝາຍ**

ເພີ່ມທະວີການນຳໃຊ້ຊັບສິນທາງປັນຍາຫຼາຍຂຶ້ນ ໃນສະຖາບັນການສຶກສາ, ສະຖາບັນຄົ້ນຄວ້າ-ວິໄຈ ແລະ ວິສາຫະກິດຂະແໜງຕ່າງໆ, ລວມທັງການຈົດທະບຽນຊັບສິນທາງປັນຍາ ເພື່ອສົ່ງເສີມຫົວຄິດປະດິດສ້າງ, ປະດິດຄິດແຕ່ງ ແລະ ສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນ.

2. **ຕົວຊີ້ວັດ**



DRAFT

- ນັກຄົ້ນຄວ້າ-ວິໄຈ ແລະ ນັກສຶກສາ ສາມາດເຂົ້າເຖິງຂໍ້ມູນສິດທິບັດ ໃຫ້ໄດ້ຫຼາຍກວ່າ 300 ຄົນ;
- ສ້າງຈຸດປະສານງານ ເພື່ອສົ່ງເສີມເຕັກໂນໂລຊີ ແລະ ນະວັດຕະກໍາ (TISC) ຢູ່ມະຫາວິທະຍາໄລທົ່ວປະເທດ ເພື່ອຊ່ວຍໃຫ້ນັກຄົ້ນຄວ້າ-ວິໄຈ ສາມາດເຂົ້າເຖິງຖານຂໍ້ມູນສິດທິບັດ ແລະ ອະນຸສິດທິບັດ;
- ຈໍານວນຄໍາຮ້ອງຂໍຈົດທະບຽນຊັບສິນອຸດສາຫະກໍາ ໂດຍສະເພາະເຄື່ອງໝາຍການຄ້າ ສໍາລັບຜະລິດຕະພັນ ODOP ໃຫ້ໄດ້ຢ່າງໜ້ອຍ 40 ເຄື່ອງໝາຍ;
- ຈົດທະບຽນຖິ່ນກໍາເນີດ ໃຫ້ໄດ້ຢ່າງໜ້ອຍ 02 ຜະລິດຕະພັນ;
- ສ້າງຖານຂໍ້ມູນພັນພືດໃໝ່ ແລະ ປັບປຸງລະບົບການຍື່ນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່.

3. **ວຽກຈຸດສຸມ**
- ສົ່ງເສີມ ຫົວຄິດປະດິດສ້າງ ແລະ ຫົວຄິດປະດິດແຕ່ງ ໃນວຽກງານການສຶກສາຄົ້ນຄວ້າ-ພັດທະນາ ການປະດິດສ້າງ ແລະ ການປະດິດຄິດແຕ່ງ ນະວັດຕະກໍາ ຜ່ານໂຄງການຕ່າງໆ ເພື່ອສະໜັບສະໜູນການຄົ້ນຄວ້າວິໄຈ;
- ສ້າງສູນສົ່ງເສີມເຕັກໂນໂລຊີ ແລະ ນະວັດຕະກໍາ (TISC) ຢູ່ມະຫາວິທະຍາໄລທົ່ວປະເທດ ເພື່ອຊ່ວຍໃຫ້ນັກຄົ້ນຄວ້າ-ວິໄຈ ສາມາດເຂົ້າເຖິງຖານຂໍ້ມູນສິດທິບັດ;
- ນໍາໃຊ້ວຽກງານຊັບສິນທາງປັນຍາເຂົ້າສູ່ຂະບວນການຜະລິດເປັນສິນຄ້າ "ໜຶ່ງຜະລິດຕະພັນ-ໜຶ່ງຊັບສິນທາງປັນຍາ"
    - ສ້າງຄວາມເຂັ້ມແຂງວຽກງານຊັບສິນທາງປັນຍາ ເພື່ອຊ່ວຍກຸ່ມຜະລິດ, ວິສາຫະກິດ ໃນການສ້າງມູນຄ່າເພີ່ມຜ່ານການສ້າງເຄື່ອງໝາຍການຄ້າ ແລະ ເຄື່ອງໝາຍລວມໝູ່ ເພື່ອເປັນຍີ່ຫໍ້ສິນຄ້າຂອງລາວ ໂດຍສະເພາະສິນຄ້າ ODOP ແລະ ສິນຄ້າກະສິກໍາ (ເຂົ້າ, ຊີ້ນສັດ ແລະ ອື່ນໆ);
    - ສົ່ງເສີມການຈົດທະບຽນຖິ່ນກໍາເນີດ ໂສມ ເມືອງດາກຈຶງ ແຂວງ ເຊກອງ; ຊາພູສັນ ແລະ ເສັ້ນໄໝ ແຂວງ ຊຽງຂວາງ, ສິນຄ້າເອກະລັກປະຈໍາທ້ອງຖິ່ນອື່ນ ແລະ ພູມປັນຍາ ອັນເປັນມູນເຊື້ອ;
    - ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຄົມສົ່ງເສີມ ສິນຄ້າຖິ່ນກໍາເນີດ.
- ສົ່ງເສີມການສ້າງຕັ້ງອົງການຄຸ້ມຄອງລິຂະສິດລວມໝູ່ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

**<u>ແຜນງານ 4</u>: ກໍ່ສ້າງ ແລະ ຍົກລະດັບພະນັກງານວິຊາການ ທີ່ຕິດພັນກັບວຽກງານຊັບສິນທາງປັນຍາ ເພື່ອຮັບປະກັນຄຸນະພາບຂອງການໃຫ້ບໍລິການຊັບສິນທາງປັນຍາ ແກ່ສາທາລະນະຊົນ**

1. **ເປົ້າໝາຍ**

ພັດທະນາຊັບພະຍາກອນມະນຸດ ໂດຍສະເພາະພະນັກງານນໍາພາຄຸ້ມຄອງ, ວິຊາການ, ນັກກວດສອບ ຢ່າງມີຈຸດສຸມ, ສອດຄ່ອງກັບທ່າແຮງ ແລະ ບູລິມະສິດຂອງການພັດທະນາ ເພື່ອໃຫ້ກາຍເປັນກໍາລັງທີ່ໜັກແໜ້ນ ແລະ ເຂັ້ມແຂງທາງດ້ານສະຕິປັນຍາໃຫ້ແກ່ການພັດທະນາຊັບສິນທາງປັນຍາ ໃນຂອບເຂດທົ່ວປະເທດ.

2. **ຕົວຊີ້ວັດ**
- ສ້າງນັກກວດສອບເຄື່ອງໝາຍການຄ້າ 03 ຄົນ
- ສ້າງນັກກວດສອບສິດທິບັດ ແລະ ອະນຸສິດທິບັດ 01 ຄົນ
- ສ້າງນັກກວດສອບແບບອຸດສາຫະກໍາ 01 ຄົນ
- ສ້າງນັກກວດສອບຖິ່ນກໍາເນີດ 01 ຄົນ
- ສ້າງນັກກວດສອບພັນພືດໃໝ່ 02 ຄົນ

DRAFT

- ສ້າງວິຊາການລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ 01 ຄົນ
- ສ້າງວິຊາການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ 02 ຄົນ
- ສ້າງວິຊາການໃຫ້ຄໍາປຶກສາດ້ານຊັບສິນທາງປັນຍາ 02 ຄົນ

3. ວຽກຈຸດສຸມ

- ການພັດທະນາຊັບພະຍາກອນມະນຸດທາງດ້ານຊັບສິນທາງປັນຍາ ດ້ວຍການສົ່ງພະນັກງານເຂົ້າຮ່ວມຝຶກອົບຮົມ, ຝຶກງານ ໄລຍະສັ້ນ-ໄລຍະຍາວ, ການສຶກສາທາງໄກດ້ວຍລະບົບອອນລາຍ, ລວມທັງການໄປຍົກລະດັບປະລິນຍາໂທ ແລະ ປະລິນຍາເອກ ກ່ຽວກັບຊັບສິນທາງປັນຍາ ທັງພາຍໃນ ແລະ ຕ່າງປະເທດ;
- ຍົກລະດັບຄວາມຮູ້ ແລະ ຄວາມສາມາດຂອງພະນັກງານໃນກົມຊັບສິນທາງປັນຍາ ໃນຂົງເຂດຕໍ່ໄປນີ້: ນັກກວດສອບສິດທິບັດ, ອະນຸສິດທິບັດ, ແບບອຸດສາຫະກໍາ, ແບບຜັງວົງຈອນລວມ, ເຄື່ອງໝາຍການຄ້າ, ຖິ່ນກໍາເນີດ, ພັນພືດໃໝ່, ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ການຄຸ້ມຄອງຂໍ້ມູນຂ່າວສານ, ການບໍລິຫານ, ຊັບພະຍາກອນພັນທຸກໍາ, ພູມປັນຍາພື້ນບ້ານອັນເປັນມູນເຊື້ອ, ການສະແດງອອກດ້ານວັດທະນະທໍາພື້ນເມືອງ, ນັກກົດໝາຍ ແລະ ຜູ້ຊ່ຽວຊານ ດ້ານຊັບສິນທາງປັນຍາ ແລະ ອື່ນໆ;
- ເພີ່ມຈໍານວນພະນັກງານ ຫຼື ພາລະກອນ ຂອງກົມຊັບສິນທາງປັນຍາ ເພື່ອໃຫ້ສອດຄ່ອງກັບປະລິມານວຽກຕົວຈິງໃນການກວດສອບ ເພື່ອໃຫ້ທັນຕາມກໍານົດເວລາ;
- ຝຶກອົບຮົມສະເພາະ ໃຫ້ພະນັກງານຂະແໜງຊັບສິນທາງປັນຍາຂັ້ນທ້ອງຖິ່ນ ກ່ຽວກັບ ວຽກງານຄຸ້ມຄອງ, ສົ່ງເສີມ ແລະ ແກ້ໄຂຂໍ້ຂັດແຍ່ງ ຊັບສິນທາງປັນຍາ.

**<u>ແຜນງານ 5:</u> ນໍາໃຊ້ເຕັກໂນໂລຊີເຂົ້າໃນການຄຸ້ມຄອງ ແລະ ບໍລິການດ້ານຊັບສິນທາງປັນຍາ ໃຫ້ທັນສະໄໝ, ສະດວກ, ວ່ອງໄວ ແລະ ໂປ່ງໃສ;**

**1. ເປົ້າໝາຍ**

ປັບປຸງພື້ນຖານໂຄງລ່າງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອໃຫ້ບໍລິການ ກ່ຽວກັບ ການຈົດທະບຽນຊັບສິນອຸດສາຫະກໍາ ແລະ ພັນພືດໃໝ່; ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ; ການແກ້ໄຂທາງດ້ານບໍລິຫານກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ ແລະ ພັນພືດໃໝ່; ແລະ ການສະໜອງຂໍ້ມູນຂ່າວສານຊັບສິນທາງປັນຍາ.

2. ຕົວຊີ້ວັດ

- ຍົກລະດັບລະບົບຖານຂໍ້ມູນຊັບສິນທາງປັນຍາ(IPAS);
- ເປີດນໍາໃຊ້ລະບົບການຍື່ນຄໍາຮ້ອງຂໍຈົດທະບຽນຊັບສິນອຸດສາຫະກໍາ ແລະ ພັນພືດໃໝ່, ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຜ່ານລະບົບອອນລາຍ (E-Filing);
- ມີລະບົບເກັບກໍາຂໍ້ມູນການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃນລະບົບ IPAS.

3. ວຽກຈຸດສຸມ

- ພັດທະນາການບໍລິການ ຍື່ນຄໍາຮ້ອງຂໍຈົດທະບຽນ ຊັບສິນອຸດສາຫະກໍາ ແລະ ພັນພືດໃໝ່, ແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຜ່ານລະບົບອອນລາຍ (E-Filing) ຊຶ່ງລວມທັງລະບົບການກວດຄົ້ນ;ນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ (IT) ທີ່ທັນສະໄໝ ແລະ ປອດໄພ ໃນການເກັບຮັກສາຂໍ້ມູນສໍາລັບ ສິດທິບັດ, ອະນຸສິດທິບັດ, ແບບອຸດສາຫະກໍາ, ເຄື່ອງໝາຍການຄ້າ, ຖິ່ນກໍາເນີດ, ພັນພືດໃໝ່, ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ;



DRAFT

- ສະໜອງການບໍລິການຊັບສິນທາງປັນຍາ ຜ່ານ IP Help Desk;
- ພັດທະນາ ແລະ ປັບປຸງ ເວັບໄຊ້ຂໍ້ມູນຂ່າວສານທາງດ້ານຊັບສິນທາງປັນຍາຂອງ ສປປ ລາວ (Lao-IP Portal);
- ສ້າງໃຫ້ມີລະບົບເກັບກຳຂໍ້ມູນການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດໃນລະບົບ IPAS

**<u>ແຜນງານ 6</u>: ສ້າງ ແລະ ປັບປຸງກົນໄກ ການແກ້ໄຂທາງດ້ານບໍລິຫານ ວຽກງານຊັບສິນທາງປັນຍາ ລວມທັງ ກົນໄກການບັງຄັບໃຊ້ກົດໝາຍຊັບສິນທາງປັນຍາ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຍຸຕິທຳ**

**1. ເປົ້າໝາຍ**

ພັດທະນາກົນໄກການແກ້ໄຂທາງດ້ານບໍລິຫານ ວຽກງານຊັບສິນທາງປັນຍາ ໃຫ້ມີປະສິດທິພາບ, ວ່ອງໄວ, ໂປ່ງໃສ ແລະ ປະສິດທິຜົນ.

**2. ຕົວຊີ້ວັດ**

- ສຳເລັດຂໍ້ຕົກລົງວ່າດ້ວຍ ການແກ້ໄຂທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່;
- ສຳເລັດຄູ່ມື ການແກ້ໄຂທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່;
- ແກ້ໄຂຄຳສະເໜີແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ ຢ່າງໜ້ອຍ 30 ຄຳສະເໜີ.

**3. ວຽກຈຸດສຸມ**

- ສ້າງຂໍ້ຕົກລົງ ແລະ ຄູ່ມື ການແກ້ໄຂທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່;
- ປັບປຸງກົນໄກການປະສານງານ ແລະ ການແບ່ງປັນຂໍ້ມູນລະຫວ່າງອົງການຈັດຕັ້ງປະຕິບັດຕ່າງໆເຊັ່ນ: ຕຳຫຼວດເສດຖະກິດ, ພາສີ, ໄອຍະການ, ສານ, ກວດກາການຄ້າ ໃນ ສປປ ລາວ;
- ເພີ່ມຄວາມຮູ້ກ່ຽວກັບສິດຊັບສິນທາງປັນຍາໃຫ້ແກ່ໜ່ວຍງານບັງຄັບໃຊ້ກົດໝາຍ ໃນການດຳເນີນຄະດີຕໍ່ຜູ້ລະເມີດສິດຊັບສິນທາງປັນຍາ ແລະ ການບັງຄັບໃຊ້ກົດໝາຍ ລວມທັງການຕັດສິນທາງສານທີ່ສຳຄັນ;
- ຊຸກຍູ້ການສ້າງຄູ່ມືການດຳເນີນຄະດີຊັບສິນທາງປັນຍາຂອງສານປະຊາຊົນ;
- ຊຸກຍູ້ການສ້າງກົນໄກການຄຸ້ມຄອງຊັບສິນທາງປັນຍາຢູ່ຕາມຊາຍແດນໃຫ້ມີປະສິດທິພາບ;
- ສຶກສາກໍລະນີການແກ້ໄຂຊັບສິນທາງປັນຍາຂອງສາກົນ ເພື່ອສ້າງເປັນຖານຂໍ້ມູນເພື່ອນຳໃຊ້ເຂົ້າໃນວຽກງານດັ່ງກ່າວ.

**<u>ແຜນງານ 7</u>: ເພີ່ມທະວີການຮ່ວມມື ແລະ ເຊື່ອມໂຍງ ວຽກງານຊັບສິນທາງປັນຍາກັບບັນດາປະເທດໃນພາກພື້ນ ແລະ ສາກົນ ແລະ ປະຕິບັດໃຫ້ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.**

**1. ເປົ້າໝາຍ**

ເພີ່ມທະວີການຮ່ວມມື ດ້ານຊັບສິນທາງປັນຍາ ໃນລະດັບຂົງເຂດພາກພື້ນ ແລະ ສາກົນ ທີ່ ສປປ ລາວ ເປັນປະເທດພາຄີ ເພື່ອເຮັດໃຫ້ບັນດານິຕິກຳ ທີ່ກ່ຽວຂ້ອງກັບ ຊັບສິນທາງປັນຍາ ຢູ່ ສປປ ລາວ ມີຄວາມສອດຄ່ອງ ກັບພັນທະສັນຍາຂອງພາກພື້ນ ແລະ ສາກົນ.

2. ຕົວຊີ້ວັດ

- ເປັນປະທານໜ່ວຍງານຮ່ວມມືດ້ານຊັບສິນທາງປັນຍາອາຊຽນ (AWGIPC) ໃນລະຫວ່າງປີ 2023 ຫາ 2025;
- ເຊັນບົດບັນທຶກຄວາມເຂົ້າໃຈໃນການຮ່ວມມືວຽກງານຊັບສິນທາງປັນຍາກັບຕ່າງປະເທດ ເພື່ອຍາດແຍ່ງການຊ່ວຍເຫຼືອດ້ານວິຊາການ ໃຫ້ໄດ້ຢ່າງໜ້ອຍ 02 ສະບັບ;
- ເຂົ້າຮ່ວມເປັນພາຄີຂອງບັນດາສົນທິສັນຍາສາກົນພາຍໃຕ້ການຄຸ້ມຄອງຂອງອົງການຊັບສິນທາງປັນຍາໂລກ.

3. ວຽກຈຸດສຸມ

- ຈັດຕັ້ງປະຕິບັດ ແຜນປະຕິບັດງານທາງດ້ານຊັບສິນທາງປັນຍາອາຊຽນ (2016-2025) ໃຫ້ສຳເລັດຕາມຄາດໝາຍ;
- ເພີ່ມທະວີການຮ່ວມມືກັບບັນດາປະເທດຕ່າງໆ ເພື່ອດຶງດູດເອົາການຊ່ວຍເຫຼືອດ້ານທຶນຮອນ ແລະ ການຊ່ວຍເຫຼືອດ້ານວິຊາການໃນການຮຽນຮູ້ ແລະ ແລກປ່ຽນປະສົບການໃຫ້ຫຼາຍຂຶ້ນ;
- ພິຈາລະນາເຂົ້າຮ່ວມເປັນພາຄີ ຂອງສົນທິສັນຍາ ແລະ ສັນຍາສາກົນ ກ່ຽວກັບ ຊັບສິນທາງປັນຍາ ທີ່ ສປປ ລາວ ເຫັນວ່າມີຄວາມສຳຄັນ, ຈຳເປັນ ແລະ ເປັນປະໂຫຍດແກ່ ສປປ ລາວ.
- ເຂົ້າຮ່ວມເປັນພາຄີຂອງ ສົນທິສັນຍາວ່າດ້ວຍການຈົດທະບຽນສາກົນ ກ່ຽວກັບ ແບບອຸດສາຫະກຳ (HAGUE Agreement on International registration on Industrial Design);
- ເຂົ້າຮ່ວມເປັນພາຄີ ສະຫະພັນສາກົນເພື່ອການປົກປ້ອງພັນພືດໃໝ່ (International Union for the Protection of New Varieties of Plants (UPOV));
- ເຂົ້າຮ່ວມເປັນພາຄີສົນທິສັນຍາ ວ່າດ້ວຍລິຂະສິດຂອງອົງການຊັບສິນທາງປັນຍາໂລກ (WIPO Copyright Treaty);
- ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາອົງການຊັບສິນທາງປັນຍາໂລກວ່າດ້ວຍຜູ້ສະແດງ ແລະ ສິ່ງບັນທຶກສຽງ (WIPO Performances and PhonogramsTreaty (WPPT));
- ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາປັກກິ່ງ ວ່າດ້ວຍການປົກປ້ອງສິດຂອງນັກສະແດງໃນສິ່ງບັນທຶກ ພາບ ແລະ ສຽງ (Beijing Treaty on Audiovisual performances);
- ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາມາຣາເກັສ ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງ ຜົນງານທີ່ໄດ້ຖືກເຜີຍແຜ່ ສຳລັບຜູ້ທີ່ຕາບອດ, ຜູ້ທີ່ພິການທາງສາຍຕາ ຫຼື ຜູ້ທີ່ມີຄວາມບົກຜ່ອງໃນການເບິ່ງເຫັນ (Marrakesh Treaty to Facilitate Access to Published Works for Persons who are Blind, Visually Impaired or Otherwise Print Disabled).

## III. ການສົ່ງເສີມບົດບາດ ຍິງ-ຊາຍ

ຊຸກຍູ້ສົ່ງເສີມ ແລະ ຍົກສູງບົດບາດຍິງຊາຍ ຢ່າງເທົ່າທຽມ ດ້ວຍການຍົກລະດັບຄວາມຮູ້ຄວາມສາມາດ, ການຍົກລະດັບ ແລະ ບົດບາດຂອງແມ່ຍິງ, ຄວາມເທົ່າທຽມດ້ານຕ່າງໆ ໃນການປະກອບສ່ວນເຂົ້າໃນການພັດທະນາຂະແໜງຊັບສິນທາງປັນຍາ ຊຶ່ງແຜນງານແມ່ນຈະເນັ້ນໃສ່:

- ຊຸກຍູ້ການມີສ່ວນຮ່ວມ ແລະ ຍົກລະດັບການເປັນຜູ້ນຳຂອງແມ່ຍິງ ໃນຂະແໜງຊັບສິນທາງປັນຍາ;
- ຊຸກຍູ້ການເຂົ້າຮ່ວມ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ວຽກງານຊັບສິນທາງປັນຍາ ດ້ວຍການຈັດຝຶກອົບຮົມ ແລະ ສຳມະນາຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ;

DRAFT

- ສົ່ງເສີມການເປັນຜູ້ນຳ ແລະ ສິດທິເທົ່າທຽມຂອງແມ່ຍິງ ໃນຂະແໜງຊັບສິນທາງປັນຍາ ຢ່າງສະໝ່ຳສະເໝີ ແລະ ເປັນປົກກະຕິ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງທັງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອຊຸກສົ່ງເສີມບົດບາດ ແລະ ການມີສ່ວນຮ່ວມ ຂອງແມ່ຍິງ ໃນການພັດທະນາຊັບສິນທາງປັນຍາ;
- ສ້າງໂຄງການ ແລະ ກິດຈະກຳຕ່າງໆ ກ່ຽວກັບການສົ່ງເສີມບົດບາດຍິງ-ຊາຍ ໃນຂະແໜງຊັບສິນທາງປັນຍາ.

DRAFT

## ພາກທີ III: ມາດຕະການຈັດຕັ້ງປະຕິບັດ, ກົນໄກປະສານງານ, ວິທີການຈັດຕັ້ງປະຕິບັດ ແລະ ການຕິດຕາມ, ປະເມີນຜົນ ແລະ ລາຍງານ

### I. ມາດຕະການຈັດຕັ້ງປະຕິບັດ

ມາດຕະການຈັດຕັ້ງປະຕິບັດແຜນພັດທະນາຊັບສິນທາງປັນຍາ ແຕ່ປະຈຸບັນຮອດປີ 2025 ແລະ ວິໄສທັດຮອດປີ 2030 ມີດັ່ງນີ້:

1. ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ສ້າງບັນດານິຕິກຳທີ່ຕິດພັນກັບຊັບສິນທາງປັນຍາ ເພື່ອເປັນບ່ອນອີງໃນການຈັດຕັ້ງຜັນຂະຫຍາຍແຜນພັດທະນາສະບັບນີ້ໃຫ້ແກ່ບັນດາຂະແໜງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
2. ກະຊວງອຸດສາຫະກຳ ແລະ ການຄ້າ ແນະນຳເຜີຍແຜ່ຢ່າງເປັນເອກະພາບ ກ່ຽວກັບແຜນພັດທະນາວຽກງານຊັບສິນທາງປັນຍາຂອງສປປ ລາວ ແຕ່ປະຈຸບັນ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ໃຫ້ແກ່ພາກສ່ວນກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມທົ່ວປະເທດ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
3. ກະຊວງ, ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດແຜນພັດທະນາດັ່ງກ່າວ ແລະ ສະຫຼຸບລາຍງານປະຈຳປີ ກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໃຫ້ຄະນະກວດກາປະເມີນຜົນ;
4. ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງພາຍໃນ ສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ບັນດາກະຊວງ ແລະ ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ສ້າງແຜນການ, ແຜນງົບປະມານ-ກົນໄກການເງິນ ແລະ ແຜນບຸກຄະລາກອນ ເພື່ອຈັດຕັ້ງປະຕິບັດບັນດາເປົ້າໝາຍລວມ ທີ່ກຳນົດໃນແຜນພັດທະນາສະບັບນີ້;
5. ກະຊວງສຶກສາທິການ ແລະ ກິລາ, ກະຊວງພາຍໃນ ສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ບັນດາກະຊວງ ແລະ ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການກວດກາ ແລະ ສັງລວມຄວາມຕ້ອງການພະນັກງານ ເພື່ອສ້າງເປັນແຜນພັດທະນາຊັບພະຍາກອນມະນຸດ ດ້ານຊັບສິນທາງປັນຍາ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາ, ໃຫ້ສາມາດບັນລຸຄາດໝາຍ ຂອງແຜນພັດທະນາສະບັບນີ້;
6. ເພີ່ມທະວີການປະສານງານຢ່າງກົມກຽວ ລະຫວ່າງອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ແລະ ສ້າງກົນໄກການປະສານງານໃນການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້;
7. ເພີ່ມທະວີການຮ່ວມມື ແລະ ການປະສານງານ ລະຫວ່າງ ພາກລັດ ແລະ ພາກທຸລະກິດ ໂດຍສົ່ງເສີມການເປັນຮຸ້ນສ່ວນ ລະຫວ່າງ ລັດ ແລະ ທຸລະກິດ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ໃຫ້ໄດ້ຮັບຜົນດີ;
8. ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເສນາທິການໃຫ້ລັດຖະບານ ແລະ ເປັນໃຈກາງປະສານງານ, ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງຜັນຂະຫຍາຍ ແຜນພັດທະນາສະບັບນີ້ ໃຫ້ປະກົດຜົນເປັນຈິງ.

### II. ກົນໄກປະສານງານ

ສ້າງ ແລະ ກຳນົດກົນໄກປະສານງານ ເພື່ອຊີ້ນຳ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ໃຫ້ໃກ້ຄຽງກັບປະເທດອື່ນ ທີ່ມີຜົນສຳເລັດ ແລະ ປະສົບການ ໃນການສົ່ງເສີມ ແລະ ພັດທະນາ ຊັບສິນທາງປັນຍາ ໃນຂອບເຂດທົ່ວປະເທດ.

DRAFT

ສ້າງລະບົບຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້ ເພື່ອໃຫ້ສາມາດລາຍງານສະພາບຜົນການຈັດຕັ້ງປະຕິບັດໃຫ້ລັດຖະບານຢ່າງເປັນ ລະບົບ, ທັນການ ແລະ ມີການສະຫຼຸບຖອດຖອນບົດຮຽນເປັນແຕ່ລະໄລຍະ.

ສ້າງກົນໄກປະສານງານກັບບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ ທີ່ມີປະສິດທິຜົນ ແລະ ມີຫຼາຍເວທີການປຶກສາຫາລື ໃນລະດັບພາກພື້ນ ແລະ ສາກົນ.

## III. ວິທີການຈັດຕັ້ງປະຕິບັດ

ການຈັດຕັ້ງປະຕິບັດແຜນການດຳເນີນງານດັ່ງກ່າວແມ່ນຈະໄດ້ນຳໃຊ້ເຄື່ອງມືຕ່າງໆດ້ວຍຫຼາຍວິທີ. ອົງການຈັດຕັ້ງທີ່ຮັບຜິດຊອບຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຈະພິຈາລະນານຳໃຊ້ເຄື່ອງມື ແລະ ວິທີການທີ່ເໝາະສົມທີ່ສຸດ (ນຳໃຊ້ເຄື່ອງມື ແລະ ວິທີການດຽວ ຫລື ຫຼາຍວິທີປະສົມປະສານກັນ) ໃນຂະບວນການຈັດຕັ້ງປະຕິບັດເພື່ອເຮັດໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິຜົນ.

ເຄື່ອງມື ແລະ ວິທີການດັ່ງກ່າວອາດລວມມີ:

- ໂຄງການພິເສດ, ກອງປະຊຸມສຳມະນາ, ກອງປະຊຸມປຶກສາຫາລື, ການຝຶກອົບຮົມສຳລັບກຸ່ມເປົ້າໝາຍສະເພາະ;
- ແປ ແລະ/ຫຼື ດັດປັບເນື້ອໃນຄູ່ມື, ປຶ້ມຕຳລາ, ສື່, ຂໍ້ມູນຕ່າງໆ ແລະ ເນື້ອໃນຫລັກສູດການຮຽນທາງໄກໃນຫົວຂໍ້ຕ່າງໆ ກ່ຽວກັບຊັບສິນທາງປັນຍາເປັນພາສາລາວ ແລະ ສາມາດນຳໃຊ້ໄດ້ກັບສະພາບຕົວຈິງ;
- ພັດທະນາ ສື່ ແລະ ອຸປະກອນການຝຶກອົບຮົມ ກ່ຽວກັບການສ້າງຈິດສຳນຶກທາງດ້ານຊັບສິນທາງປັນຍາ;
- ງານສຳມະນາ, ງານວາງສະແດງ, ແຂ່ງຂັນປະກວດຜົນງານ ແລະ ການຈັດລາຍການໂທລະພາບ ກ່ຽວກັບຊັບສິນທາງປັນຍາ;
- ໃຫ້ທຶນການສຶກສາ (ທັງໄລຍະສັ້ນ ແລະ ໄລຍະຍາວ);
- ການທັດສະນະສຶກສາ.

ອົງການຈັດຕັ້ງທີ່ຮັບຜິດຊອບຈັດຕັ້ງປະຕິບັດກິດຈະກຳຕ່າງໆຈະລະບຸຄູ່ຮ່ວມງານທີ່ມີທ່າແຮງ ແລະ ຜູ້ທີ່ສາມາດໃຫ້ການຊ່ວຍເຫລືອທາງດ້ານວິຊາການຢ່າງເໝາະສົມເພື່ອໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້.

## IV. ການຕິດຕາມ, ປະເມີນຜົນ ແລະ ລາຍງານ

ກະຊວງອຸດສາຫະກຳ ແລະ ການຄ້າເປັນຈຸດໃຈກາງໃນການ ປະສານສົມທົບ ແລະ ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ພັດທະນາສ້າງ ກົນໄກ ແລະ ແຜນການ, ໂດຍອີງໃສ່ວິທີການ ແລະ ເຄື່ອງມື ທີ່ເໝາະສົມສຳລັບການຕິດຕາມ, ການກວດກາ, ການປະເມີນ ແລະ ການຕີລາຄາ ສະພາບການຈັດຕັ້ງຜັນຂະຫຍາຍແຜນພັດທະນາດສະບັບນີ້ ໃຫ້ເປັນປົກກະຕິ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງສ້າງຕັ້ງຄະນະກວດກາປະເມີນຜົນ ໂດຍປະກອບຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ, ປະເມີນ ແລະ ຕີລາຄາ ຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດແຜນພັດທະນາສະບັບນີ້.

ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະເປັນໃຈກາງໃນການສັງລວມ ແລະ ຕີລາຄາປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແລະ ສະຫຼຸບລາຍງານຜົນຂອງການຈັດຕັ້ງຜັນຂະຫຍາຍແຜນ

DRAFT

ພັດທະນາສະບັບນີ້ ປະຈຳປີ, ໄລຍະກາງສະໄໝ ແລະ ທ້າຍສະໄໝ ປີ 2025 ໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອລາຍງານຕໍ່ໄປຍັງລັດຖະບານ.

ລັດຖະບານຈະປະເມີນຄວາມຄືບໜ້າ, ປັບປຸງ ແລະ ຂະຫຍາຍແຜນພັດທະນາຊັບສິນທາງປັນຍາໃນສົກປີຕໍ່ໄປ.

DRAFT

## ພາກທີ IV : ງົບປະມານ ແລະ ແຫຼ່ງທຶນ

### I. ງົບປະມານ

ເພື່ອເຮັດໃຫ້ບັນດາແຜນງານ ແລະ ວຽກຈຸດສຸມ ທີ່ກຳນົດໄວ້ໃນແຜນພັດທະນາຊັບສິນທາງປັນຍາ ແຕ່ປະຈຸບັນ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ໄດ້ຮັບການຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດຕາມຈຸດປະສົງ ລະດັບຄາດໝາຍທີ່ກຳນົດໄວ້ ຈຶ່ງຄາດຄະເນງົບປະມານທີ່ຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ດັ່ງນີ້:

ທຶນພາຍໃນ (ລັດຖະບານລົງທຶນ) 12,625,000,000 ກີບ

ທຶນພາຍໃນ (ລາຍຮັບວິຊາການ) 10,000,000,000 ກີບ

ທຶນຕ່າງປະເທດ (ການຊ່ວຍເຫຼືອຈາກສາກົນ)

(ເອກະສານຊ້ອນທ້າຍ: ກິດຈະກຳ, ໂຄງການ ແລະ ງົບປະມານ ພາຍໃຕ້ແຜນພັດທະນາຊັບສິນທາງປັນຍາ ແຕ່ປະຈຸບັນຮອດປີ 2025).

### II. ແຫຼ່ງທຶນ

ລັດຖະບານ, ຄູ່ຮ່ວມພັດທະນາ ແລະ ບັນດາອົງການຈັດຕັ້ງສາກົນ ທັງພາຍໃນ, ພາກພື້ນ ແລະ ສາກົນ ມີບົດບາດສຳຄັນ ໃນການສະໜັບສະໜູນທຶນຮອນ ແລະ ເຕັກນິກວິຊາການເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາຊັບສິນທາງປັນຍາ. ສະນັ້ນ, ລັດຖະບານ ໂດຍສະເພາະ ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຕ້ອງໄດ້ພິຈາລະນາບັນດາໂຄງການນຳໃຊ້ທຶນລັດ ທີ່ຕິດພັນກັບວຽກງານຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການໃນການປະສານງານ ແລະ ຂຶ້ນແຜນກິດຈະກຳ ພາຍໃຕ້ແຜນພັດທະນາຊັບສິນທາງປັນຍາ ແຕ່ປະຈຸບັນຮອດປີ 2025 ເພື່ອຂໍການຊ່ວຍເຫຼືອຈາກຄູ

DRAFT